ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ທັນວາ 2025
ປີທີ 14
ສະບັບທີ 1045
ລາຍສັປະດາ

## ສູນທອນພົດສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດ ກ່າວໃນພິທີສະເຫຼີມສະຫຼອງວັນສະຖາປະນາ ສປປລາວ ຄົບຮອບ 50 ປີ



-ບັນດາສະຫາຍການນຳ, ອະດີດການນຳພັກ-ລັດທີ່ນັບຖື,

- ບັນດາສະຫາຍສະມາຊິກພັກ, ພະນັກງານອາວຸໂສໃນທົ່ວປະເທດ,

-ແຂກຕ່າງປະເທດ, ບັນດາທູຕານຸທູດ, ຕາງໜ້າອົງການຈັດຕັ້ງສາກົນ, ທ່ານຍິງ, ທ່ານຊາຍ ທີ່ມີກຽດ,

- ພີ່ນ້ອງຮ່ວມຊາດ, ເພື່ອນມິດທີ່ຮັກແພງທັງຫຼາຍ.

ມື້ນີ້, ຄະນະບໍລິຫານງານສູນກາງພັກ, ລັດຖະບານ, ສະພາແຫ່ງຊາດ, ແນວລາວສ້າງຊາດ, ກຳລັງປະກອບອາວຸດແລະປວງຊົນລາວ ໄດ້ຮ່ວມເປັນຈິດໜຶ່ງໃຈດຽວ ຈັດຕັ້ງພິທີໂຮມຊຸມນຸມໃຫຍ່ຂຶ້ນ ໃນສະຖານທີ່ອັນສັກກາລະບູຊາ ແລະ ທີ່ຕິດພັນກັບບັນດາເຫດການປະຫວັດສາດ

ອ່ານຕໍ່ໜ້າ 6

## ປະທານສະພາແຫ່ງຊາດ ພົບປະປະທານ ສະພາທີ່ປຶກສາການເມືອງທົ່ວປະເທດຈີນ



(ສພຊ) - ວັນທີ 2 ທັນວາຜ່ານມາ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບ ແລະ ພົບປະກັບສະຫາຍຫວັງ ຮູ ໜິງ ກຳມະການປະຈຳກົມການເມືອງສູນກາງພັກກອມມູນິດຈີນ, ປະທານສະພາທີ່ປຶກສາການເມືອງທົ່ວປະເທດຈີນ

ອ່ານຕໍ່ໜ້າ 8




ຖ້າຈັດວາງພະນັກງານຫົວຈັກຫຼັກແຫຼ່ງເໝາະກັບຄົນ, ເໝາະກັບຖານະຕຳແໜ່ງ ໂດຍສະເພາະແມ່ນຜູ້ທີ່ເປັນຫົວໜ້ານັ້ນມັນຈະກໍ່ໃຫ້ມີການຫັນປ່ຽນໃໝ່ແລະມີຄວາມກ້າວໜ້າຂຶ້ນຢ່າງເດັ່ນຊັດ; ແຕ່ຖ້າການຈັດວາງນັ້ນຫາກບໍ່ຖືກຕ້ອງ ມັນຈະກາຍເປັນສິ່ງກີດຂວາງ ແລະ ຈຳກັດຂະບວນການຂອງຂະແໜງການຂອງທ້ອງຖິ່ນ ແລະ ຮາກຖານບໍ່ໜ້ອຍ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 170)

ພວກເຮົາຕ້ອງກ້າເລື່ອນຊັ້ນໃຫ້ພະນັກງານ ທະແນມແຕ່ເຂົາເປັນຜູ້ທີ່ມີສະຕິບຸກບືນ, ສະແຫວງຫາຄວາມກ້າວໜ້າ ແລະ ສູ້ຊົນເພື່ອເຮັດຫຼ້ອນໜ້າທີ່ຮັບຜິດຊອບທີ່ຖືກມອບໝາຍ, ຖ້າວ່າເຂົາມີດ້ານໃດດ້ານໜຶ່ງຍັງອ່ອນຢູ່ ກໍຕ້ອງມີແຜນການບຳລຸງຊ່ວຍເຫຼືອເຂົາດ້ວຍຄວາມມານະພະຍາຍາມ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 170-171)

ອ່ານຕໍ່ສະບັບໜ້າ

## ຜົນກອງປະຊຸມສະໄໝສາມັນຂອງລັດຖະບານ ປະຈຳເດືອນພະຈິກ




(ສພຊ) - ຕອນແລງວັນທີ 12 ທັນວານີ້ ທີ່ສຳນັກງານນາຍົກລັດຖະມົນຕີ, ທ່ານສອນໄຊ ສີດພະໄຊ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ໂຄສົກລັດຖະບານ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນກອງປະຊຸມສະໄໝສາມັນຂອງລັດຖະບານ ປະຈຳເດືອນພະຈິກ 2025 ວ່າ: ກອງປະຊຸມ

ອ່ານຕໍ່ໜ້າ 7




## ຮອງປະທານສະພາແຫ່ງຊາດ ຮັບການຢ້ຽມຂ່ຳນັບຂອງ ຮອງລັດຖະມົນຕີກະຊວງການຕ່າງປະເທດອາແຊກໄບຊານ



(ສພຊ) - ຕອນບ່າຍວັນທີ 8 ທັນວາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດແຫ່ງສປປລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ເອລນູຣ໌ ມຳມາດົບ (Elnur Mammadov) ຮອງລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສ.ອາແຊກໄບຊານ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ລະຫວ່າງວັນທີ 7-10 ທັນວາ 2025.

ອ່ານຕໍ່ໜ້າ 4

## ເຝິກອົບຮົມວຽກງານເລືອກຕັ້ງ ໃຫ້ພະນັກງານຫຼັກແຫຼ່ງຂັ້ນທ້ອງຖິ່ນ




(ສພຊ) - ວັນທີ 11-12 ທັນວານີ້ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມເຝິກອົບຮົມໃຫ້ແກ່ພະນັກງານຫຼັກແຫຼ່ງຂັ້ນທ້ອງຖິ່ນເພື່ອຮັບໃຊ້ການເລືອກ

ອ່ານຕໍ່ໜ້າ 8



3 ສູດເຄື່ອງດູດບຳລຸງ... (ໜ້າ 9)



ສະພາແຫ່ງຊາດ... (ໜ້າ 10)

ເຝົ້າເບິ່ງ ໄດ້ຍິນດຽວ
ວິເສດ ສະແຫວງສຶກສາ

ເສັ້ນທາງເພື່ອແກ້ໄຂ... (ໜ້າ 12)

# ທ່ານ ປອ. ໄຊສົມພອນ ພົມວິຫານ ຕ້ອນຮັບຮອງປະທານສະພາສູງລັດເຊຍ



(ສພຊ) - ວັນທີ 2 ທັນວາຜ່ານມາ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບແລະພົບປະກັບທ່ານ ນິໂກລາຍ ຊູຣະວາໂລບ ຮອງປະທານສະພາສູງແຫ່ງສະຫະພັນລັດເຊຍ ໃນໂອກາດນຳພາຄະນະຜູ້ແທນຂັ້ນສູງສະຫະພັນລັດເຊຍ ມາເຂົ້າຮ່ວມການສະເຫຼີມສະຫຼອງວັນສະຖາປະນາ ສປປລາວ ຄົບຮອບ 50 ປີ.

ໃນການພົບປະ, ທ່ານປະທານສະພາແຫ່ງຊາດ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການມາເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສະຖາປະນາ ສປປລາວ ຄົບຮອບ 50 ປີ ຂອງທ່ານ ນິໂກລາຍ ຊູຣະວາໂລບແລະຄະນະເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມມາແຕ່ດົນນານ ແລະ ການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ. ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຕີລາຄາສູງຕໍ່ຜົນການພົບປະລະຫວ່າງທ່ານ ນິໂກລາຍ ຊູຣະວາໂລບ ແລະ ທ່ານ ພທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ເຊິ່ງສອງຝ່າຍໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ຖອດຖອນບົດຮຽນໃນການປະຕິບັດໜ້າທີ່ດ້ານນິຕິບັນຍັດ, ພ້ອມກັນທົບທວນຄືນໝາກຜົນຂອງການຮ່ວມມືໃນໄລຍະຜ່ານມາ ແລະ ເອກະພາບກ່ຽວກັບທິດທາງການຮ່ວມມືໃນຕໍ່ໜ້າ ລະຫວ່າງສອງອົງການນິຕິບັນຍັດ ກໍຄືສອງຄະນະມິດຕະພາບລັດຖະສະພາ ລາວ-ລັດເຊຍ, ລັດເຊຍ-ລາວ.

ທ່ານນິໂກລາຍຊູຣະວາໂລບ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ການຕ້ອນຮັບອັນອົບອຸ່ນຂອງທ່ານປະທານສະພາແຫ່ງຊາດ, ສະແດງຄວາມຊົມເຊີຍບັນດາຜົນສຳເລັດແລະຜົນງານທີ່ສປປລາວຍາດມາໄດ້ຕະຫຼອດໄລຍະ 50 ປີທີ່ຜ່ານມາ ທັງອວຍພອນວັນເກີດປະທານໄກສອນ ພົມວິຫານ ຄົບຮອບ 105 ປີ, ແຈ້ງໃຫ້ຊາບສະພາບການພົ້ນເດັ່ນຂອງລັດເຊຍພ້ອມທັງໃຫ້ຄຳໝັ້ນສັນຍາວ່າຈະສືບຕໍ່ຮ່ວມກັບຄະນະມິດຕະພາບລັດຖະສະພາ ລາວ-ລັດເຊຍ ສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອຂອງສອງປະເທດກໍຄືສອງອົງການນິຕິບັນຍັດໃຫ້ເປັນຮູບປະທຳຍິ່ງໆຂຶ້ນ; ທ່ານ ນິໂກລາຍ ຊູຣະວາໂລບ ໄດ້ອວຍພອນໃຫ້ສະພາແຫ່ງຊາດລາວປະສົບຜົນສຳເລັດໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV ທີ່ຈະມີຂຶ້ນໃນຕົ້ນປີໜ້ານີ້.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຝາກຄຳອວຍພອນໄຊອັນປະເສີດ ແລະ ເຊື້ອເຊີນທ່ານ ນາງ ວາເລັນຕິນາ ມັດວິຢຽນໂກ ປະທານສະພາສູງແຫ່ງສະຫະພັນລັດເຊຍມາຢ້ຽມຢາມ ສປປລາວ ໃນວັນເວລາທີ່ສອງຝ່າຍເຫັນວ່າມີຄວາມເໝາະສົມ.

ໃນຕອນທ້າຍ, ທ່ານປອ. ໄຊສົມພອນ ພົມວິຫານ ໄດ້ມອບຫຼຽນກາທີລະນຶກ 50 ປີ ສະພາແຫ່ງຊາດລາວ ໃຫ້ແກ່ທ່ານ ນິໂກລາຍ ຊູຣາວະໂລບ.

ວັນດຽວກັນ, ທ່ານພທ. ສຸວອນ ເລືອງບຸນມີ ກໍໄດ້ພົບປະສອງຝ່າຍກັບທ່ານ ນິໂກລາຍ ຊູຣະວາໂລບ ເຊິ່ງສອງຝ່າຍໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດ ເວົ້າລວມ, ລະຫວ່າງສອງອົງການນິຕິບັນຍັດ ກໍຄືລະຫວ່າງຄະນະມິດຕະພາບລັດຖະສະພາສອງປະເທດເຊິ່ງເປັນການປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນທີ່ເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ ໃຫ້ນັບມື້ນັບເປັນຮູບປະທຳ. ສອງຝ່າຍເຫັນດີເປັນເອກະພາບສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງປະເທດ ກໍຄື ລະຫວ່າງສອງອົງການນິຕິບັດຍັດ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາ ແລະ ສົນທິສັນຍາທີ່ສອງລັດຖະບານໄດ້ລົງນາມຮ່ວມກັນ ໃຫ້ເປັນຮູບປະທຳ ເປັນຕົ້ນແມ່ນການຮ່ວມມືດ້ານເສດຖະກິດ-ການຄ້າ, ການລົງທຶນ, ການຂົນສົ່ງ, ການພັດທະນາຊັບພະຍາກອນມະນຸດ, ອຸດສາຫະກຳດ້ານພະລັງງານ ແລະ ອື່ນໆ ໃຫ້ໄດ້ຮັບການເສີມຂະຫຍາຍຂຶ້ນເລື້ອຍໆ ຕາມທ່າແຮງຕົວຈິງຂອງສອງປະເທດ; ສືບຕໍ່ຮ່ວມມື, ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນແລະສາກົນເພື່ອປະກອບສ່ວນເຂົ້າໃນພາລະກິດຮັກສາສັນຕິພາບ, ສະຖຽນລະພາບແລະການຮ່ວມມືເພື່ອການພັດທະນາ ໃນພາກພື້ນ ແລະ ໃນໂລກ.



# ປາຖະກະຖາວັນສ້າງຕັ້ງສະພາແຫ່ງຊາດ



(ສພຊ) - ວັນຈັນທີ 8 ທັນວາຜ່ານມາ ທີ່ສະພາແຫ່ງຊາດ(ສພຊ) ໄດ້ມີພິທີປາຖະກະຖາວັນສ້າງຕັ້ງສະພາແຫ່ງຊາດ ຄົບຮອບ 50 ປີ (2/12/1975-2/12/2025) ໂດຍການປາຖະກະຖາຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການ, ຄະນະເລຂາທິການ ແລະ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ບັນດາທ່ານຮອງລັດຖະມົນຕີກະຊວງ-ອົງການອ້ອມຂ້າງສູນກາງ ພ້ອມດ້ວຍຄະນະກົມ, ຄະນະພະແນກ ຕະຫຼອດຮອດພະນັກງານຈາກກະຊວງ-ອົງການ ແລະ ສພຊ ເຂົ້າຮ່ວມ 400 ກວ່າຄົນ.

ຈຸດປະສົງເພື່ອທົບທວນຄືນມູນເຊື້ອການສ້າງຕັ້ງ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ ໄປຄຽງຄູ່ກັບການເຕີບໃຫຍ່ຂະຫຍາຍຕົວຂອງ ສປປລາວ ເຊິ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງປວງຊົນລາວທັງຊາດພາຍໃຕ້ການນຳພາຂອງພັກແລະປະຕິບັດ 3 ພາລະບົດບາດຂອງ ສພຊ ແລະ ສືບຕໍ່ສ້າງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ; ເພື່ອໂຄສະນາປຸກລະດົມໃຫ້ປະຊາຊົນລາວບັນດາເຜົ່າໄດ້ຮັບຮູ້ ແລະ ເຂົ້າໃຈ ຄວາມໝາຍຄວາມສຳຄັນຂອງສະພາແຫ່ງຊາດ ຖືເອົາໂອກາດນີ້ ສຶກສາອົບຮົມການເມືອງ-ແນວຄິດສະມາຊິກພັກ-ພະນັກງານ ໃຫ້ຍົກສູງນ້ຳໃຈຮັກຊາດ, ເສີມຂະຫຍາຍຄວາມສາມັກຄີ ແລະ ຍູ້ແຮງບົດບາດການນຳພາຂອງພັກ; ຖືເອົາການສະເຫຼີມສະຫຼອງວັນສ້າງຕັ້ງສະພາແຫ່ງຊາດ ຄົບຮອບ 50 ປີ ເປັນການປຸກລະດົມນ້ຳໃຈຮັກຊາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ທັງເຮັດສຳເລັດໜ້າທີ່ວຽກງານທີ່ພັກ-ລັດ, ການຈັດຕັ້ງມອບໝາຍໃຫ້ ແລະ ສ້າງຜົນງານຂ່ຳນັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIIຂອງພັກ, ກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ.

ໃນພິທີ, ໄດ້ຮັບຊົມຮູບເງົາການເຄື່ອນໄຫວຂອງສະພາແຫ່ງຊາດ ຕະຫຼອດໄລຍະ 50 ປີຜ່ານມາ; ຈາກນັ້ນ, ໄດ້ຮັບຟັງການທວນຄືນມູນເຊື້ອຂະບວນປະຕິວັດ ແລະ ຄວາມໝາຍສຳຄັນຂອງການສ້າງຕັ້ງສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**

# ຊົມເຊີຍວັນສ້າງຕັ້ງສະພາແຫ່ງຊາດ ຄົບຮອບ 50 ປີ (2 ທັນວາ 1975 - 2 ທັນວາ 2025)

ຕະຫຼອດໄລຍະ 50 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ ໄປຄຽງຄູ່ກັບການເຕີບໃຫຍ່ຂະຫຍາຍຕົວຂອງ ສປປລາວ ອັນໄດ້ປະກອບສ່ວນສຳຄັນເຂົ້າໃນການເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງທົ່ວປວງຊົນລາວທັງຊາດ ພາຍໃຕ້ການນຳພາຂອງພັກ, ກອງປະຊຸມສູນກາງພັກ ປີ 1975 ໄດ້ວາງທິດທາງ ແລະ ໜ້າທີ່ລວມໃນການຕໍ່ສູ້ຍາດເອົາໄຊຊະນະຂັ້ນສຸດທ້າຍຂອງການປະຕິວັດລາວ ໂດຍນຳໃຊ້ສາມບາດຄ້ອນຍຸດທະສາດຂອງພັກເຮົາ (ການເມືອງເປັນພື້ນຖານ, ການທະຫານໜູນໜີບແລະກຳລັງແຮງປວງຊົນເປັນໄມ້ງັດ) ເຊິ່ງໄດ້ປະຕິບັດໜ້າທີ່ໃນການນຳພາທົ່ວລະບົບການເມືອງ, ນຳພາການສ້າງລັດຂອງປະຊາຊົນ ໂດຍປະຊາຊົນ ເພື່ອປະຊາຊົນ ຍາດໄດ້ຜົນສຳເລັດຢ່າງສະຫງ່າງາມເປັນກ້າວໆມາ ແລະ ປັດໄຈຕັດສິນຜົນສຳເລັດການປະຕິວັດຊາດປະຊາທິປະໄຕ(1945-1975) ມີຄຸນຄ່າມະຫາສານ, ສາມາດນຳໃຊ້ຢ່າງສອດຄ່ອງກົມກຽວໃນຍຸກແຫ່ງການສ້າງສາພັດທະນາເສດຖະກິດ-ສັງຄົມ, ຄ້ຳປະກັນຄວາມໝັ້ນຄົງ ແລະ ຍືນຍົງໃນລະບອບປະຊາທິປະໄຕປະຊາຊົນລາວ. ພາຍຫຼັງທີ່ໄດ້ມີການລຸກຮື້ຂຶ້ນຍຶດອຳນາດໃນຂອບເຂດທົ່ວປະເທດ, ມາໃນວັນທີ 23 ສິງຫາ 1975 ທົ່ວປວງຊົນລາວທັງຊາດແລະຊັ້ນຄົນຕ່າງໆ ພາຍໃຕ້ການນຳພາອັນປີຊາສາມາດແລະສະຫຼາດສ່ອງໃສຂອງພັກປະຊາຊົນປະຕິວັດລາວ ໄດ້ນຳພາປະຊາຊົນລາວບັນດາເຜົ່າໂຮມຊຸມນຸມໂຄ່ນລົ້ມອຳນາດການປົກຄອງເກົ່າຂອງຈັກກະພັດລ່າເມືອງຂຶ້ນ ແລະ ພວກປະຕິການຂາຍຊາດຢ່າງເດັດຂາດ ໄດ້ຮັບໄຊຊະນະຢ່າງສົມບູນ ອັນເປັນການມ້ວນທ້າຍຂອງຂະບວນຍຶດອຳນາດໃນຂອບເຂດທົ່ວປະເທດ, ໃນວັນທີ 2 ທັນວາ 1975 ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ໄຂຂຶ້ນຢ່າງສະຫງ່າຜ່າເຜີຍຢູ່ນະຄອນຫຼວງວຽງຈັນ ໄດ້ເປັນເອກະສັນກັນຮັບຮອງເອົາມະຕິອັນເປັນປະຫວັດການໃນການຕົກລົງລົບລ້າງລະບອບລາຊາທິປະໄຕທີ່ຫຼ້າສະໄໝ ແລະ ສະຖາປະນາລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ, ສ້າງຕັ້ງສະພາປະຊາຊົນສູງສຸດ, ແຕ່ງຕັ້ງປະທານປະເທດ, ສ້າງຕັ້ງລັດຖະບານ ສປປລາວ; ກຳນົດທຸງຊາດ, ເພງຊາດ ແລະ ພາສາທາງການ ເຊິ່ງເປັນການໄຂສັງກາດໃໝ່-ສັງກາດແຫ່ງເອກະລາດ ອິດສະຫຼະພາບທີ່ແທ້ຈິງຂອງປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ. ພ້ອມດຽວກັນນັ້ນ, ກໍຖືໄດ້ວ່າ: ວັນທີ 2 ທັນວາ 1975 ເປັນຕົ້ນມາ ສະພາປະຊາຊົນສູງສຸດ ໃນເມື່ອກ່ອນ ກໍຄືສະພາແຫ່ງຊາດໃນປັດຈຸບັນ ໄດ້ຮັບການເລືອກຕັ້ງແຕ່ຊຸດທີ I ຫາ IX ມີຜົນສຳເລັດ ດັ່ງນີ້:

ສະພາປະຊາຊົນສູງສຸດ ຊຸດທີ I ໄດ້ເລືອກຕັ້ງເອົາທ່ານ ສຸພານຸວົງ ເປັນປະທານສະພາປະຊາຊົນສູງສຸດ ແລະ ມີຮອງປະທານສະພາປະຊາຊົນສູງສຸດ 4 ທ່ານ; ມີຄະນະປະຈຳ 5 ທ່ານ ແລະປະກອບມີ3ກຳມາທິການ.

ສະພາປະຊາຊົນສູງສຸດ ຊຸດທີ II ໄດ້ເລືອກຕັ້ງເອົາທ່ານ

ອ່ານຕໍ່ໜ້າ 7

# 22 ກຸມພາ 2026 ເປັນວັນເລືອກຕັ້ງ



(ສພຊ) - ວັນທີ 3 ທັນວານີ້, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີຮອງປະທານສະພາແຫ່ງຊາດ, ໂຄສົກຂອງຄະນະກຳມະການເລືອກຕັ້ງລະດັບຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບການປະກາດວັນເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ເຊິ່ງທ່ານໃຫ້ຮູ້ວ່າ: ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດສະບັບເລກທີ 311/ປປທ, ລົງວັນທີ 1 ທັນວາ 2025 ວ່າດ້ວຍການປະກາດເອົາວັນອາທິດ ກົງກັບວັນທີ 22 ກຸມພາ 2026 ເປັນວັນເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V. ວັນທີ 22 ກຸມພາທີ່ຈະມາເຖິງນີ້, ເປັນວັນມີຄວາມໝາຍສຳຄັນທາງປະຫວັດສາດ ແລະ ຊີວິດການເມືອງຂອງປະຊາຊົນລາວບັນດາເຜົ່າ ໃນຖານະຜູ້ເປັນເຈົ້າຂອງປະເທດຊາດແລະເປັນເຈົ້າຂອງອຳນາດລັດ ເຊິ່ງເປັນອຳນາດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງລັດຖະທຳມະນູນ ສະບັບປີ 2025; ວັນທີ 22 ກຸມພາ 2026 ເປັນວັນທີ່ປະຊາຊົນລາວບັນດາເຜົ່າຜູ້ມີສິດເລືອກຕັ້ງທົ່ວປະເທດ ຈະໄດ້ພ້ອມກັນໄປໃຊ້ສິດປ່ອນບັດເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕາງໜ້າຕົນປະຕິບັດສິດອຳນາດຂອງປະຊາຊົນລາວບັນດາເຜົ່າຢູ່ໃນອົງການອຳນາດລັດຂັ້ນສູນກາງ ແລະ ທ້ອງຖິ່ນ ແນໃສ່ປົກປ້ອງສິດແລະຜົນປະໂຫຍດຂອງຊາດ, ຂອງທ້ອງຖິ່ນ, ປົກປ້ອງສິດແລະຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ, ພົນລະເມືອງລາວ, ນິຕິບຸກຄົນ ແລະ ການຈັດຕັ້ງ, ພ້ອມກັນສູ້ຊົນພັດທະນາປະເທດຊາດເພື່ອເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ຕາງໜ້າຄະນະກຳມະການເລືອກຕັ້ງລະດັບຊາດ ຮຽກຮ້ອງໃຫ້ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ຈົ່ງກະກຽມທາງດ້ານຈິດໃຈ, ເຫື່ອແຮງ ເພື່ອເຂົ້າຮ່ວມການເລືອກຕັ້ງຄັ້ງນີ້ໃຫ້ບັນລຸຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ....311...../ປປທ

ນະຄອນຫຼວງວຽງຈັນ, ວັນທີ...1..ທັນວາ..2025....

ລັດຖະດຳລັດ

**ວ່າດ້ວຍການປະກາດວັນເລືອກຕັ້ງ**

**ສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V**

- ອີງຕາມ ມາດຕາ 68 ຂໍ້ 9 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025;
- ອີງຕາມ ມາດຕາ 33 ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 58/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການກຳນົດວັນເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ສະບັບເລກທີ 328/ຄປຈ, ລົງວັນທີ 21 ພະຈິກ 2025;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 53/ຄປຈ, ລົງວັນທີ 21 ພະຈິກ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດເອົາວັນອາທິດ ກົງກັບວັນທີ 22 ກຸມພາ 2026 ເປັນວັນເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V.

**ມາດຕາ 2** ຄະນະກຳມະການເລືອກຕັ້ງລະດັບຊາດ, ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນລັດຖະດຳລັດສະບັບນີ້.

**ມາດຕາ 3** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

# ປະທານສະມາຄົມມິດຕະພາບ ລາວ-ກູບາ ຢ້ຽມຂໍ່ານັບ ກຳມະການກົມການເມືອງສູນກາງພັກກອມມູນິດກູບາ



(ສພຊ) - ວັນທີ 3 ທັນວານີ້ທີ່ໂຮງແຮມຣໍລິເດອິນ, ຄະນະຜູ້ແທນສະມາຄົມມິດຕະພາບ ລາວ-ກູບານຳໂດຍສະຫາຍ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກູບາ ໄດ້ຢ້ຽມຂໍ່ານັບສະຫາຍ ປອ. ນາງ ມາຣຕາ ອາຢາລາ ອາວິລາ (Marta Ayala Avila) ກຳມະການກົມການເມືອງສູນກາງພັກກອມມູນິດກູບາ, ຜູ້ອຳນວຍການໃຫຍ່ສູນວິສະວະກຳພັນທຸກຳ ແລະ ເຕັກໂນໂລຊີຊີວະພາບ ເນື່ອງໃນໂອກາດມາຢ້ຽມຢາມ ແລະ ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສະຖາປະນາສປປລາວ ຄົບຮອບ 50 ປີ ເຊິ່ງເປັນການປະກອບສ່ວນອັນສຳຄັນທີ່ສຸດໃນການເສີມຂະຫຍາຍແລະຮັດແໜ້ນສາຍພົວພັນມິດຕະພາບອັນເປັນມູນເຊື້ອຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ ໃຫ້ນັບມື້ຂະຫຍາຍຕົວແລະກ້າວເຂົ້າສູ່ລວງເລິກຢ່າງບໍ່ຢຸດຢັ້ງ.

ສະຫາຍ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສະຖາປະນາ ສປປລາວ ຄົບຮອບ 50 ປີ, ຕີລາຄາສູງຕໍ່ການນຳພາຂອງພັກກອມມູນິດກູບາ ໃນການນຳພາປະຊາຊົນປົກປັກຮັກສາ ແລະ ເສີມຂະຫຍາຍໝາກຜົນຂອງການປະຕິວັດກູບາແລະນຳພາສ້າງສາພັດທະນາປະເທດຢ່າງຕໍ່ເນື່ອງ; ພ້ອມນັ້ນ, ຍັງສະແດງຄວາມຍິນດີແລະພາກພູມໃຈທີ່ສາຍພົວພັນຮ່ວມມືລາວ-ກູບາ ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ແລະ ໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ. ຈາກນັ້ນ, ໄດ້ລາຍງານການພົວພັນຮ່ວມມືລະຫວ່າງສະມາຄົມມິດຕະພາບ ລາວ-ກູບາ ແລະ ກູບາ-ລາວ ແລະ ການເຄື່ອນໄຫວຂອງສະມາຄົມມິດຕະພາບ ລາວ-ກູບາ ໂດຍຫຍໍ້ ເຊິ່ງສອງສະມາຄົມມິດຕະພາບ ມີກົນໄກປະສານງານ, ພົບປະແລກປ່ຽນ, ໄປມາຫາສູ່, ມີການປະສານສົມທົບ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ ໃນເວທີພາກພື້ນ ແລະ ສາກົນ; ໄດ້ຮ່ວມເຄື່ອນໄຫວ ແລະ ສ້າງກິດຈະກຳຮ່ວມກັບສະຖານທູດກູບາປະຈຳ ສປປລາວ ໂດຍສະເພາະຈັດປາຖະກະຖາເລົ່າມູນເຊື້ອໃນໂອກາດວັນສຳຄັນຂອງກູບາ.

ສຳລັບການພົວພັນຮ່ວມມືລະຫວ່າງສະແຫ່ງຊາດລາວ ແລະ ສະພາແຫ່ງຊາດອຳນາດປະຊາຊົນກູບາ ໄດ້ມີການພົວພັນກັນຢ່າງປົກກະຕິຕໍ່ເນື່ອງ; ພິເສດ, ທ້າຍປີ 2024 ສະຫາຍ ເອັດສະເຕບານ ລາໂຊ ເຮີນານເດັສ ກຳມະການກົມການເມືອງສູນການພັກກອມມູນິດກູບາ, ປະທານສະພາແຫ່ງຊາດອຳນາດປະຊາຊົນກູບາ ໄດ້ເດີນທາງມາຢ້ຽມຢາມລັດຖະກິດຢ່າງເປັນທາງການ ແລະ ເຂົ້າຮ່ວມການສະເຫຼີມສະຫຼອງຄົບຮອບ 50 ປີ ແຫ່ງການສ້າງສາຍພົວພັນການທູດລະຫວ່າງ ສປປລາວ ແລະ ສ.ກູບາ ຢູ່ ສປປ ລາວ, ພ້ອມທັງໄດ້ລົງນາມບົດບັນທຶກຄວາມເຂົ້າໃຈລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດອຳນາດປະຊາຊົນກູບາສະບັບໃໝ່ຮ່ວມກັນ. ນອກນັ້ນ, ສອງຝ່າຍຍັງໄດ້ມີການແລກປ່ຽນການຢ້ຽມຢາມຂອງຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆຢ່າງປົກກະຕິ, ພ້ອມທັງແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານ, ສົ່ງສານຊົມເຊີຍ, ສານອວຍພອນເຊິ່ງກັນແລະກັນ ໃນໂອກາດວັນສຳຄັນຂອງຊາດ ແລະ ສະໜັບສະໜູນກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ອາລິນ ສຸພົມມະປະດິດ)**

# ກ້ອນກຳລັງເຄື່ອງໝາຍຊາດ



ເຄື່ອງໝາຍຊາດ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຮູບວົງມົນ ດ້ານລຸ່ມມີຮູບເຄິ່ງກົງຈັກເປັນແຂ້ວເຟືອງແລະໂບສີແດງຂຽນອັກສອນ "ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ"ສອງຂ້າງອ້ອມດ້ວຍຮວງເຂົ້າສຸກເປັນຮູບເຟື້ອງພະຈັນ ແລະ ໂບສີແດງຂຽນອັກສອນ "ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ" ລະຫວ່າງກາງຂອງສອງປ້າຍຮວງເຂົ້າ ມີຮູບທາດຫຼວງ, ຢູ່ກາງຮູບວົງມົນ ມີຫົນທາງ, ທົ່ງນາ, ປ່າໄມ້ ແລະ ເຂື່ອນໄຟຟ້ານ້ຳຕົກ ຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 203/ຄປຈ, ລົງວັນທີ 30 ກໍລະກົດ 2025 ກ່ຽວກັບການປັບປຸງການໃສ່ສີເຄື່ອງໝາຍຊາດທີ່ນຳໃຊ້ປັດຈຸບັນ; ເຄື່ອງໝາຍຊາດເປັນສູນລວມຈິດໃຈ ທັງເປັນຄວາມເອກອ້າງທະນົງໃຈຂອງຊາດລາວ ບໍ່ວ່າຈະຢູ່ພາຍໃນພາກພື້ນ ແລະ ເວທີສາກົນ.

ກ້ອນກຳລັງເຄື່ອງໝາຍຊາດ ເດີນສວນສະໜາມໂດຍພະນັກງານສະພາແຫ່ງຊາດ 185 ທ່ານ. ສະພາແຫ່ງຊາດ ແມ່ນອົງການຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນຍັດ ມີພາລະບົດບາດພິຈາລະນາ, ຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງບັນດາອົງການລັດ ເຊິ່ງໃນເມື່ອກ່ອນ ເອີ້ນວ່າສະພາປະຊາຊົນສູງສຸດ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 2 ທັນວາ 1975 ພ້ອມກັບການສ້າງຕັ້ງສປປລາວ; ຕະຫຼອດໄລຍະ 50 ປີແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ ໄປຄຽງຄູ່ກັບການເຕີບໃຫຍ່ຂະຫຍາຍຕົວຂອງ ສປປລາວ ໄດ້ປະກອບສ່ວນສຳຄັນເຂົ້າໃນການເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງທົ່ວປວງຊົນລາວທັງຊາດ ພາຍໃຕ້ການນຳພາຂອງພັກ ກໍຄືການສືບຕໍ່ສ້າງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນໃຫ້ມີຄວາມໜັກແໜ້ນເຂັ້ມແຂງເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ຕະຫຼອດໄລຍະ 50 ປີ, ສະພາແຫ່ງຊາດ ຈັດຕັ້ງ ແລະ ເຄື່ອນໄຫວບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ນິຕິທຳ, ຍຸຕິທຳ, ປະຕິບັດໜ້າທີ່ວຽກງານຕາມລະບອບປະຊຸມ, ຕົກລົງບັນຫາຕາມສຽງສ່ວນຫຼາຍ, ຕິດແທດຕົວຈິງກັບປະຊາຊົນ ແລະ ຮາກຖານ, ປະສານສົມທົບຢ່າງກົມກຽວກັບອົງການອຳນາດລັດທີ່ກ່ຽວຂ້ອງ ແລະ ອົງການອື່ນໆ; ພິເສດ ໃນປີນີ້, ສະພາແຫ່ງຊາດ ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາລັດຖະທຳມະນູນ ສະບັບປັບປຸງປີ 2025. ປັດຈຸບັນ, ສປປລາວ ມີກົດໝາຍທີ່ຜັນຂະຫຍາຍຈາກລັດຖະທຳມະນູນ ທີ່ສະພາແຫ່ງຊາດຮັບຮອງທັງໝົດ 176 ສະບັບ ເພື່ອເປັນເຄື່ອງມືທີ່ສຳຄັນໃນການດັດປັບສາຍພົວພັນການຄຸ້ມຄອງລັດ ຄຸ້ມຄອງສັງຄົມ ໃຫ້ມີຄວາມສີວິໄລ ແລະ ຍືນຍົງ.

# ສຳເລັດເຝິກອົບຮົມເພື່ອຮັບໃຊ້ການເລືອກຕັ້ງ




(ສພຊ) - ວັນທີ 4-5 ທັນວານີ້ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມເຝິກອົບຮົມໃຫ້ແກ່ພະນັກງານຫຼັກແຫຼ່ງອ້ອມຂ້າງສູນກາງ ເພື່ອຮັບໃຊ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ), ຮອງຫົວໜ້າອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ; ມີບັນດາທ່ານກຳມະການ ຄລຊ, ພະນັກງານນຳພາ-ຄຸ້ມຄອງອ້ອມຂ້າງສູນກາງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກ່າວວ່າ: ກອງປະຊຸມຄັ້ງນີ້ ເພື່ອກະກຽມໃຫ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ດຳເນີນຖືກຕ້ອງຕາມເນື້ອໃນ, ຈິດໃຈ ຂອງມະຕິກົມການເມືອງສູນກາງພັກ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ແລະ ມີຄວາມເປັນເອກະພາບແຕ່ລະພາກສ່ວນ ເພື່ອເຮັດໃຫ້ການກະກຽມການເລືອກຕັ້ງຄັ້ງນີ້ ບັນລຸຜົນສຳເລັດຕາມຈຸດປະສົງແລະລະດັບຄາດໝາຍທີ່ວາງໄວ້ ທັງເປັນການສຶກສາອົບຮົມການເມືອງ-ແນວຄິດ ແລະ ປຸກລະດົມການເສີມຂະຫຍາຍຈິດໃຈຮັກຊາດ ສິດປະຊາທິປະໄຕ ໃນການເລືອກຕັ້ງ, ຍົກສູງສະຕິຊາດ, ມີຄວາມເປັນເອກະພາບ ແລະ ຄວາມສາມັກຄີປອງດອງ, ຍົກສູງສະຕິລະວັງຕົວ, ເປັນເຈົ້າການຕໍ່ຕ້ານກົນອຸບາຍ ແລະ ການທຳລາຍຂອງພວກປໍລະປັກທີ່ຫວັງມ້າງເພທຳລາຍລະບອບໃໝ່ຂອງພວກເຮົາ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ ເອກະສານສຳຄັນຄື: ເຊື່ອມຊຶມແລະຜັນຂະຫຍາຍມະຕິກົມການເມືອງສູນກາງພັກວ່າດ້ວຍການເພີ່ມທະວີນຳພາ-ຊີ້ນຳຂອງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ເພີ່ມທະວີການນຳພາແນວຄິດ ແລະເສີມຂະຫຍາຍສິດປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ການຈັດຕັ້ງປະຕິບັດແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ຄຳຖາມ-ຄຳຕອບ ກ່ຽວກັບການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ຄຳຖາມ-ຄຳຕອບ ກ່ຽວກັບພາລະບົດບາດ, ສິດແລະໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຄຳຖາມ-ຄຳຕອບ ກ່ຽວກັບລະບຽບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຄຳແນະນຳກ່ຽວກັບການແຕ່ງຕັ້ງຄະນະກຳມະການເລືອກຕັ້ງ ແລະ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງຂັ້ນທ້ອງຖິ່ນ, ຢູ່ສະຖານທູດ, ກົງສູນລາວ ແລະ ສຳນັກງານຜູ້ຕາງໜ້າຖາວອນຂອງ ສປປລາວ ຢູ່ຕ່າງປະເທດ; ຄຳແນະນຳກ່ຽວກັບການໂຄສະນາ ແລະ ປຸກລະດົມຂະບວນການ; ຄຳແນະນຳກ່ຽວກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຄຳແນະນຳກ່ຽວກັບລະບຽບການຄຸ້ມຄອງງົບປະມານຮັບໃຊ້ໃຫ້ແກ່ການເລືອກຕັ້ງ; ຄຳແນະນຳກ່ຽວກັບການຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມເຝິກອົບຮົມພະນັກງານຫຼັກແຫຼ່ງທົ່ວປະເທດກ່ຽວກັບວຽກງານເລືອກຕັ້ງ.

ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມ ແລະ ປະກອບຄວາມເຫັນຕໍ່ແຕ່ລະເນື້ອໃນ ເພື່ອຄວາມເຂົ້າໃຈເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

**(ນາງ ກຸກກິກ ບຸດດາໄຊ)**

# ພົບປະສອງຝ່າຍລະຫວ່າງ ຄະນະສັນຕິພາບ ແລະ ສາມັກຄີ ລາວ-ຫວຽດນາມ



(ສພຊ) - ໂດຍຕອບສະໜອງຕາມຄຳເຊີນຂອງຄະນະສັນຕິພາບ ແລະ ສາມັກຄີຂອງລາວ, ຄະນະຜູ້ແທນຄະນະສັນຕິພາບຫວຽດນາມ ນຳໂດຍສະຫາຍ ອວງ ຈູລື໋ ອະດີດກຳມະການສູນກາງພັກກອມມູນິດຫວຽດນາມ, ອະດີດຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບຫວຽດນາມ ໄດ້ມາຢ້ຽມຢາມແລະເຮັດວຽກຢູ່ ສປປລາວ ລະຫວ່າງວັນທີ 8-11 ທັນວາ 2025.

ວັນທີ 9 ທັນວາ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມພົບປະສອງຝ່າຍລະຫວ່າງຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແລະ ຄະນະສັນຕິພາບຫວຽດນາມ ເຊິ່ງຝ່າຍລາວນຳໂດຍສະຫາຍສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ແລະ ສາມັກຄີຂອງລາວແລະຝ່າຍຫວຽດນາມ ນຳໂດຍສະຫາຍ ອວງ ຈູລື໋; ສອງຝ່າຍໄດ້ແຈ້ງສະພາບການພົ້ນເດັ່ນຂອງແຕ່ລະປະເທດໃຫ້ກັນຊາບ, ປຶກສາຫາລື, ແລກປ່ຽນບົດຮຽນ ແລະ ປະສົບການໃນການເຄື່ອນໄຫວວຽກງານສັນຕິພາບ ພ້ອມທັງແລກປ່ຽນຂໍ້ມູນ ແລະ ທັດສະນະ ກ່ຽວກັບສະພາບການພົ້ນເດັ່ນຂອງພາກພື້ນ ແລະ ຂອງໂລກ ທີ່ສອງຝ່າຍສົນໃຈ ເຮັດໃຫ້ການພົບປະຄັ້ງນີ້ ມີເນື້ອໃນອຸດົມສົມບູນ ແລະ ມີບັນຍາກາດ.

ໃນວັນດຽວກັນ, ຄະນະຜູ້ແທນຄະນະສັນຕິພາບຫວຽດນາມ ໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ບຸນທອງ ຈິດມະນີ ກຳມະການກົມການເມືອງສູນກາງພັກພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ; ສະຫາຍ ບຸນທອງ ຈິດມະນີ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ຂອງຄະນະຜູ້ແທນຄະນະສັນຕິພາບຫວຽດນາມ ເຊິ່ງຖືເປັນການປະກອບສ່ວນອັນສຳຄັນ ເຂົ້າໃນການເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນລາວ-ຫວຽດນາມ; ສະຫາຍ ອວງ ຈູລື໋ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ແຈ້ງໃຫ້ຊາບຈຸດປະສົງຂອງການມາຢ້ຽມຢາມ ສປປລາວແລະການເຄື່ອນໄຫວໂດຍຫຍໍ້ຂອງຄະນະສັນຕິພາບຫວຽດນາມ. ສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ທີ່ນັບມື້ໄດ້ຮັບການເສີມຂະຫຍາຍທັງທາງກວ້າງ ແລະ ລວງເລິກ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ; ພ້ອມນັ້ນ, ຍັງໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງຄະນະສັນຕິພາບຂອງສອງປະເທດ ທີ່ມີກົນໄກການພົວພັນຮ່ວມມື, ປະສານງານ, ຖອດຖອນບົດຮຽນນຳກັນ, ແລກປ່ຽນຂໍ້ມູນຂ່າວສານ, ແລກປ່ຽນທັດສະນະ ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີພາກພື້ນ ແລະ ສາກົນ ເຊິ່ງເປັນການປະກອບສ່ວນສ້າງສະພາບແວດລ້ອມໃນພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມມືໃນພາກພື້ນ ແລະ ສາກົນ.

ນອກນັ້ນ, ຄະນະຜູ້ແທນຄະນະສັນຕິພາບຫວຽດນາມຍັງໄດ້ໄປຢ້ຽມຢາມ ແລະ ພົບປະການນຳແຂວງວຽງຈັນ, ຊົມສະຖານທີ່ທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ເຂດເສດຖະກິດ ຈຳນວນໜຶ່ງ ໃນນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ.

## ຮອງປະທານ...

(ຕໍ່ຈາກໜ້າ 1)

ໃນໂອກາດນີ້, ທ່ານປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການເດີນທາງມາຢ້ຽມຢາມແລະເຮັດວຽກຢູ່ ສປປລາວ ຄັ້ງນີ້ ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ ແລະ ການຮ່ວມມືອັນດີ ລະຫວ່າງ ສປປລາວ ແລະ ສ.ອາແຊກໄບຊານ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ ແລະ ການຢ້ຽມຢາມໄດ້ມີຂຶ້ນໃນທ່າມກາງທີ່ສອງປະເທດພວມຮ່ວມກັນສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 30 ປີ ໃນປີ 2025. ພ້ອມນີ້, ທ່ານຮອງປະທານສະພາແຫ່ງຊາດ ຍັງຕີລາຄາສູງຕໍ່ຜົນຂອງກອງປະຊຸມປຶກສາຫາລືດ້ານການເມືອງຄັ້ງປະຖົມມະລຶກ ລະຫວ່າງສອງກະຊວງການຕ່າງປະເທດລາວ ແລະ ອາແຊກໄບຊານ ເຊິ່ງສອງຝ່າຍໄດ້ພ້ອມກັນທົບທວນຄືນການພົວພັນຮ່ວມມືລະຫວ່າງສອງປະເທດທາງດ້ານການເມືອງ, ການພົວພັນລະຫວ່າງສອງພັກ, ສອງລັດຖະສະພາ ຂອງສອງປະເທດ, ການຮ່ວມມືທາງດ້ານເສດຖະກິດ-ການຄ້າ ແລະ ການລົງທຶນ, ການທ່ອງທ່ຽວ, ການສຶກສາ, ລວມເຖິງວຽກງານການເກັບກູ້ລະເບີດບໍ່ທັນແຕກ ແລະ ສອງປະເທດຍັງມີທ່າແຮງໃນການເສີມຂະຫຍາຍສາຍພົວພັນນຳກັນໃນຕໍ່ໜ້າ. ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ຕີລາຄາສູງການພົວພັນຮ່ວມມືລະຫວ່າງສອງປະເທດ ທີ່ມີມາແຕ່ດົນນານໃນຊຸມປີ 70 ຂອງສະຕະວັດທີ່ແລ້ວ ເຊິ່ງປະເທດອາແຊກໄບຊານ ໄດ້ໃຫ້ການຊ່ວຍເຫຼືອດ້ານການພັດທະນາຊັບພະຍາກອນມະນຸດ ແກ່ ສປປລາວ ເປັນຈຳນວນຫຼາຍ, ເຊິ່ງປັດຈຸບັນບັນດາອະດີດນັກສຶກສາເຫຼົ່ານັ້ນ ໄດ້ມີໜ້າທີ່ຕຳແໜ່ງທີ່ສຳຄັນໃນກົງຈັກພັກ-ລັດ ສປປລາວ.

ໂອກາດດຽວກັນນີ້, ທ່ານ ເອລມູຣ໌ ມຳມາດົບ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ໄດ້ແຈ້ງໃຫ້ຝ່າຍລາວຊາບເຖິງຈຸດປະສົງຂອງການຢ້ຽມຢາມ ສປປລາວ ໃນຄັ້ງນີ້, ລວມເຖິງຜົນຂອງການປຶກສາຫາລືກັບທ່ານ ໄມທອງ ທຳມະວົງສາ ຮອງລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສປປລາວ ແລະ ຍັງໄດ້ຢືນຢັນຈະຊຸກຍູ້ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງສອງປະເທດ ລາວ ແລະ ອາແຊກໄບຊານ ກໍຄືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ໃຫ້ສືບຕໍ່ຂະຫຍາຍຕົວຂຶ້ນຢ່າງບໍ່ຢຸດຢັ້ງ.

ພ້ອມດຽວກັນນີ້, ສອງຝ່າຍໄດ້ແລກປ່ຽນຄຳຄິດເຫັນຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດໃນໄລຍະຜ່ານມາ, ໂດຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບແລະການຮ່ວມມືອັນດີ ລະຫວ່າງ ສປປລາວ ແລະ ສ.ອາແຊກໄບຊານ, ການພົວພັນດ້ານພັກ, ກໍຄືການພົວພັນຮ່ວມມືອັນດີງາມລະຫວ່າງສອງອົງການນິຕິບັນຍັດ; ສອງຝ່າຍໄດ້ຕີລາຄາບົດບາດສຳຄັນຄະນະມິດຕະພາບລັດຖະສະພາ ເຊິ່ງເປັນກົນໄກໜຶ່ງໃນການປະກອບສ່ວນຊຸກຍູ້ ແລະ ສົ່ງເສີມສາຍພົວພັນມິດຕະພາບລະຫວ່າງສອງປະເທດ ເຊິ່ງຝ່າຍອາແຊກໄບຊານ ກໍຈະມີການສ້າງຄະນະມິດຕະພາບລັດຖະສະພາກັບສະພາແຫ່ງຊາດລາວ. ສະພາແຫ່ງຊາດລາວ ໄດ້ສົ່ງຄະນະຜູ້ແທນຂັ້ນສູງ ເຂົ້າຮ່ວມການເລືອກຕັ້ງປະທານາທິບໍດີຂອງອາແຊກໄບຊານ ໃນເດືອນກຸມພາ 2024 ຜ່ານມາ, ລັດຖະສະພາອາແຊກໄບຊານ ໄດ້ສົ່ງຄະນະຜູ້ແທນເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (ໄອປາ) ຄັ້ງທີ 45 ທີ່ສະພາແຫ່ງຊາດລາວເປັນເຈົ້າພາບໃນປີ 2024; ສອງອົງການຍັງໄດ້ມີການພົບປະໃນໂອກາດເຂົ້າຮ່ວມກອງປະຊຸມລັດຖະສະພາກພື້ນ ແລະ ສາກົນ ເປັນຕົ້ນ ກອງປະຊຸມ IPU, APA, AIPA ແລະ ອື່ນໆ.

ໃນໂອກາດນີ້, ສອງຝ່າຍຍັງໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນ ເພື່ອເສີມຂະຫຍາຍການພົວພັນຮ່ວມມືລະຫວ່າງສອງປະເທດ ກໍຄືລະຫວ່າງສອງອົງການນິຕິບັນຍັດໃຫ້ສືບຕໍ່ຂະຫຍາຍຕົວຍິ່ງໆຂຶ້ນ; ສອງຝ່າຍເຫັນດີຊຸກຍູ້ໃຫ້ສືບຕໍ່ມີການແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆນຳກັນ, ລວມເຖິງການສືບຕໍ່ໃຫ້ການຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

# ຜົນງານພົ້ນເດັ່ນຂອງສະພາແຫ່ງຊາດ ຊຸດທີ IX (2021-2025)



ການປະຕິບັດພາລະບົດບາດ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

**ການປະຕິບັດພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:**

ປີ 2021 ສະພາແຫ່ງຊາດ ໄດ້ຄົ້ນຄວ້າພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດ ໂດຍຜ່ານກົນໄກການດຳເນີນກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃນນີ້:

- ຮັບຮອງເອົາບັນດາເນື້ອໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ໂດຍສະເພາະການເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງບຸກຄະລາກອນໃນຕຳແໜ່ງສຳຄັນຂອງລັດ ເຊິ່ງໄດ້ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ທັງໝົດ 21 ສະບັບ;

- ຮັບຮອງເອົາບັນດາເນື້ອໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ໂດຍສະເພາະການກຳນົດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ, ບັນດາກົດໝາຍທີ່ພົວພັນກັບສອງວຽກງານດັ່ງກ່າວ ເຊິ່ງໄດ້ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ທັງໝົດ 4 ສະບັບ;

-ຄະນະປະຈຳສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມຂອງຕົນ ຈຳນວນ 7 ຄັ້ງ, ສາມາດພິຈາລະນາບັນດາເນື້ອໃນສຳຄັນ ທັງໝົດ 138 ຫົວຂໍ້ ເຊິ່ງໄດ້ອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ ທັງໝົດ 32 ສະບັບ.

**ການປະຕິບັດພາລະບົດບາດດ້ານການຕິດຕາມກວດກາ:**

ປີ 2021 ສະພາແຫ່ງຊາດ ໄດ້ເຄື່ອນໄຫວປະຕິບັດວຽກງານຕິດຕາມກວດກາຜ່ານການດຳເນີນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະລັດຖະບານ, ສານປະຊາຊົນສູງສຸດ-ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ-ອົງການກວດກາແຫ່ງລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ເພື່ອພິຈາລະນາ ແລະ ປຶກສາຫາລືເປັນເອກະພາບຕໍ່ວຽກງານພົ້ນເດັ່ນຂອງສັງຄົມ ເປັນຕົ້ນ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ການກະກຽມຮ່າງກົດໝາຍ ທີ່ຈະນຳເຂົ້າກອງປະຊຸມສະພາແຫ່ງຊາດ, ການກຳນົດກົນໄກການປະສານງານ, ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການດຳເນີນຄະດີຕາມຂະບວນຍຸຕິທຳ, ການຕິດຕາມ-ຊຸກຍູ້ວຽກງານກວດສອບ-ກວດກາໃຫ້ມີປະສິດທິຜົນກວ່າເກົ່າ, ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ຂອງສະມາຊິກສະພາແຫ່ງຊາດ.

ສະພາແຫ່ງຊາດ ໄດ້ຮັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ທັງໝົດ 222 ເລື່ອງ ເຊິ່ງສາມາດຄົ້ນຄວ້າພິຈາລະນາແກ້ໄຂໄດ້ຈຳນວນ 190 ເລື່ອງ ເທົ່າກັບ 85.58% ຂອງຈຳນວນຄຳຮ້ອງທັງໝົດ; ຕ້ອນຮັບ ແລະ ໃຫ້ຄຳປຶກສາແນະນຳແກ່ປະຊາຊົນ ທັງໝົດ 434 ຄັ້ງ. ນອກນັ້ນ, ຍັງໄດ້ເຄື່ອນໄຫວຕິດຕາມກວດກາການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຢູ່ 4 ແຂວງ ຄື: ນະຄອນຫຼວງວຽງຈັນ, ແຂວງຫຼວງພະບາງ, ແຂວງຫົວພັນ ແລະ ແຂວງວຽງຈັນ.

**ການເຄື່ອນໄຫວວຽກງານການຕ່າງປະເທດ**

ປີ 2021 ສະພາແຫ່ງຊາດ ເອົາໃຈໃສ່ຜັນຂະຫຍາຍແນວທາງການຕ່າງປະເທດຂອງພັກ ມາເປັນແຜນການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ໄດ້ທັງໝົດ 60 ຄັ້ງ. ໃນນີ້, ເຄື່ອນໄຫວຢ້ຽມຢາມ, ພົບປະແລກປ່ຽນບົດຮຽນກັບບັນດາປະເທດເພື່ອນມິດຍຸດທະສາດ ຈຳນວນ 13 ຄັ້ງ; ເຂົ້າຮ່ວມກອງປະຊຸມລະດັບພາກພື້ນ ແລະ ສາກົນ ໃນຮູບແບບດຳເນີນກອງປະຊຸມປົກກະຕິ ແລະ ກອງປະຊຸມທາງໄກ ໄດ້ຈຳນວນ 30 ຄັ້ງ; ຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດລວມທັງທູຕານຸທູດ, ອົງການຈັດຕັ້ງພາກພື້ນ-ສາກົນທີ່ປະຈຳຢູ່ສປປລາວ ຈຳນວນ 17 ຄັ້ງ. ອັນພົ້ນເດັ່ນ, ຄະນະປະຈຳສະພາແຫ່ງຊາດໄດ້ແຕ່ງຕັ້ງຄະນະມິດຕະພາບລັດຖະສະພາລະຫວ່າງສະພາແຫ່ງຊາດກັບບັນດາຕ່າງປະເທດ ທັງໝົດ 22 ຄະນະ ແລະ ແຕ່ງຕັ້ງຄະນະອົງການລັດຖະສະພາພາກພື້ນ ແລະ ສາກົນ ຈຳນວນ 3 ອົງການ ຄື: ຄະນະສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA), ຄະນະສະຫະພັນລັດຖະສະພາສາກົນ (IPU) ແລະ ຄະນະສະມັດຊາລັດຖະສະພາບັນດາປະເທດທີ່ໃຊ້ພາສາຝຣັ່ງ (APF).



ການເຄື່ອນໄຫວວຽກງານການຕ່າງປະເທດ

**ການປະຕິບັດພາລະບົດບາດດ້ານນິຕິບັນຍັດ:**

ປີ 2022 ສະພາແຫ່ງຊາດ ໄດ້ພິຈາລະນາ, ຮັບຮອງເອົາບັນດາກົດໝາຍທັງໝົດຈຳນວນ 11 ສະບັບ, ໃນນີ້: ກົດໝາຍສ້າງໃໝ່ 4 ສະບັບ ຄື: 1. ກົດໝາຍວ່າດ້ວຍຍານພາຫະນະທາງບົກ, 2. ກົດໝາຍວ່າດ້ວຍເຕັກໂນໂລຊີລະດັບສູງ, 3. ກົດໝາຍວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່, 4. ກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ; ກົດໝາຍປັບປຸງ 7 ສະບັບ ຄື: 1. ກົດໝາຍວ່າດ້ວຍການສ້າງນິຕິກຳ, 2. ກົດໝາຍວ່າດ້ວຍລັດຖະບານ, 3. ກົດໝາຍວ່າດ້ວຍງົບປະມານແຫ່ງລັດ, 4. ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, 5. ກົດໝາຍວ່າດ້ວຍການຄວບຄຸມຢາສູບ, 6. ກົດໝາຍວ່າດ້ວຍໂທລະຄົມມະນາຄົມ, 7. ກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ.

ໄດ້ຈັດຕັ້ງປະຕິບັດປະເມີນກົດໝາຍ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ຄື: 1. ກົດໝາຍວ່າດ້ວຍທີ່ດິນ, 2. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, 3. ກົດໝາຍວ່າດ້ວຍຊັບສິນຂອງລັດ, 4. ກົດໝາຍວ່າດ້ວຍແຮ່ທາດ ຢູ່ເປົ້າໝາຍຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ ເຊິ່ງມີຜູ້ເຂົ້າຮ່ວມ 850 ເທື່ອຄົນ, ຍິງ 45 ເທື່ອຄົນ.

ໄດ້ດຳເນີນກອງປະຊຸມສຳມະນາວິທະຍາສາດແນວຄິດໄກສອນ ພົມວິຫານ ແລະ ກອງປະຊຸມສຳມະນາວິທະຍາສາດກ່ຽວກັບການຄົ້ນຄວ້າຍົກເວັ້ນບາງມາດຕາຂອງກົດໝາຍ ຢູ່ສູນກາງ ແລະ ທ້ອງຖິ່ນ ເຊິ່ງມີຜູ້ເຂົ້າຮ່ວມ 122 ທ່ານ, ຍິງ 25 ທ່ານ.

ໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ທີ່ສປປລາວ ເປັນພາຄີ 2 ສະບັບ ຄື: ສົນທິສັນຍາແຮງງານສາກົນວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ, ສົນທິສັນຍາວ່າດ້ວຍຂອບແຜນງານສົ່ງເສີມຄວາມປອດໄພ ແລະ ສຸຂະພາບແຮງງານ.

ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 1 ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ໄດ້ທັງໝົດ 1,239 ຈຸດ, ມີຜູ້ເຂົ້າຮ່ວມ 114,204 ເທື່ອຄົນ, ຍິງ 47,260 ເທື່ອຄົນ; ນອກນັ້ນ, ຍັງໄດ້ລະດົມທຶນຊ່ວຍເຫຼືອປະຊາຊົນ ລວມມູນຄ່າທັງໝົດ 1,374,240,756 ກີບ.

**ການປະຕິບັດພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:**

ປີ 2021 ສະພາແຫ່ງຊາດ ໄດ້ຄົ້ນຄວ້າພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມລັດຖະທຳມະນູນ ແລະ ກົດໝາຍ ກຳນົດ ໂດຍຜ່ານກົນໄກການດຳເນີນກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃນນີ້:

- ຮັບຮອງເອົາບັນດາເນື້ອໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ໂດຍສະເພາະການເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງບຸກຄະລາກອນໃນຕຳແໜ່ງສຳຄັນຂອງລັດ ເຊິ່ງໄດ້ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ທັງໝົດ 21 ສະບັບ;

- ຮັບຮອງເອົາບັນດາເນື້ອໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ໂດຍສະເພາະການກຳນົດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ, ບັນດາກົດໝາຍທີ່ພົວພັນກັບສອງວຽກງານດັ່ງກ່າວ ເຊິ່ງໄດ້ອອກເປັນມະຕິກອງປະຊຸມສະພາແຫ່ງຊາດທັງໝົດ 4 ສະບັບ;

-ຄະນະປະຈຳສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມຂອງຕົນ ຈຳນວນ 7 ຄັ້ງ, ສາມາດພິຈາລະນາບັນດາເນື້ອໃນສຳຄັນ ທັງໝົດ 138 ຫົວຂໍ້ ເຊິ່ງໄດ້ອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ ທັງໝົດ 32 ສະບັບ.


ການປະຕິບັດພາລະບົດບາດ ດ້ານການຕິດຕາມກວດກາ

# ປະທານ ສພຂ ຫຼວງນໍ້າທາ ເຂົ້າຮ່ວມສະຫຼຸບການ ຈັດຕັ້ງປະຕິບັດວຽກງານ ປະຈຳ 5 ປີ ຢູ່ເມືອງລອງ




(ສພຂ) - ວັນທີ 27 ພະຈິກ, ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ ໄດ້ເຂົ້າຮ່ວມກອງປະຊຸມສະຫລຸບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳ 5 ປີ (2021-2025) ແລະ ທິດທາງແຜນການ 5 ປີ (2026-2030) ຢູ່ເມືອງລອງແຂວງຫຼວງນໍ້າທາ, ມີການນຳຂອງເມືອງ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ,

ກອງປະຊຸມໄດ້ຮັບຟັງການລາຍງານສະຫລຸບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານປະຈຳ5ປີ(2021-2025) ແລະ ທິດທາງແຜນການ 5 ປີ (2026-2030) ຂອງຄະນະສະມາຊິກສະພາປະຊາຊົນແຂວງຊຸດທີ IV ປະຈຳເຂດເລືອກຕັ້ງເມືອງລອງ, ເຊິ່ງມີທັງໝົດ 5 ທ່ານ, ຍິງ 1 ທ່ານ, ໃນນັ້ນ ມີສະມາຊິກສະພາແຫ່ງຊາດ 1 ທ່ານ; ໃນໄລຍະຜ່ານມາໄດ້ເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມ 3 ພາລະບົດບາດຄື: ດ້ານນິຕິກຳ; ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ດ້ານການຕິດຕາມກວດກາ,ວຽກງານປີ່ນອ້ອມອື່ນໆ ເຫັນວ່າມີຜົນສຳເລັດຫລາຍສົມຄວນ; ນອກນັ້ນຍັງນຳເອົາເນື້ອໃນຜົນສໍເລັດ ກອງປະຊຸມສະໄໝສາມັນເທື່ອທີ1-9ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງສະພາປະຊາຊົນແຂວງຊຸດທີ IV ແລະ ກົດໝາຍຈຳນວນໜຶ່ງລົງໂຄສະນາເຜີຍແຜ່ໃຫ້ແກ່ກຸ່ມເປົ້າໝາຍໃຫ້ຮັບຮູ້ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ-ລັດ, ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ, ທ້ອງຖິ່ນ ຢູ່ພາຍໃນເມືອງລອງ ໄດ້ທັງໝົດ 62 ບ້ານ, 2 ສຳນັກງານ ມີຜູ້ເຂົ້າຮ່ວມທັງໝົດ 5,489 ຄົນ, ຍິງ 1,709 ຄົນ; ພ້ອມນັ້ນ ຜູ້ແທນກອງປະຊຸມໄດ້ປະກອບຄຳຄິດເຫັນຊົມເຊີຍຕໍ່ກັບຜົນງານ ແລະ ເພື່ອເຮັດໃຫ້ ການຈັດຕັ້ງປະຕິບັດວຽກງານຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ໃນຕໍ່ໜ້າໃຫ້ມີຄຸນນະພາບຂຶ້ນກວ່າເກົ່າ.

ໂອກາດນີ້ທ່ານຄຳຟອງ ອິນມານີ ຍັງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບຜົນສຳເລັດທີ່ຍາດມາ ໄດ້ເຫັນວ່າມີຜົນສຳເລັດຫຼາຍດ້ານ, ທັງເນັ້ນໜັກໃຫ້ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງໃຫ້ເພີ່ມທະວີຊີ້ນຳ-ນຳພາການເມືອງແນວຄິດໃຫ້ພະນັກງານຫຼັກແຫຼ່ງ, ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ຖືກມອບໝາຍເປັນຕົ້ນສາມພາລະບົດບາດຂອງສະພາປະຊາຊົນແຂວງ, ຕ້ອນຮັບໃຫ້ຄຳປຶກສາໃນການພົບປະປະຊາຊົນ ແລະ ກະກຽມວຽກງານປີ່ນອ້ອມເພື່ອກຽມຄວາມພ້ອມໃຫ້ແກ່ການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ V ທີ່ຈະປະຕິບັດໃນຕໍ່ໜ້າໃຫ້ສຳເລັດ, ທວງທັນເວລາ.

## ສູນທອນພິດ...

(ຕໍ່ຈາກໜ້າ 1)

ດ້ານການເມືອງ, ວັດທະນະທຳ-ສັງຄົມ ຂອງຊາດລາວເຮົາແຫ່ງນີ້ເພື່ອສະເຫຼີມສະຫຼອງວັນຊາດຄົບຮອບ 50 ປີ.

ກ່ອນໜ້ານີ້ 50 ປີ, ນະສະຖານທີ່ນີ້ ໄດ້ເປັນບ່ອນເຕົ້າໂຮມກ້ອນກຳລັງອັນມະຫຶມາຂອງນັກປະຕິວັດແລະປະຊາຊົນລາວຜູ້ຮັກຊາດເພື່ອຢຶດອຳນາດການປົກຄອງ ຢູ່ນະຄອນຫຼວງວຽງຈັນ, ອັນນຳໄປສູ່ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ເພື່ອປະກາດລົບລ້າງລະບອບລ່າເມືອງຂຶ້ນ ແລະ ສັກດີນາ, ຂຸນເສິກ ຢ່າງສິ້ນເຊີງ, ສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ 1975. ຈາກເຫດການປະຫວັດສາດອັນຍິ່ງໃຫຍ່ຄັ້ງນີ້ "ໄດ້ເຮັດໃຫ້ຊາຕາກຳຂອງຊາດ ແລະ ສັງຄົມປະເທດເຮົາ ປ່ຽນແປງຢ່າງເລິກເຊິ່ງ ແລະ ໄດ້ໄຂສັງກາດໃໝ່ແຫ່ງການກໍ່ສ້າງປິຕຸພູມລາວທີ່ແສນຮັກແລະຫວງແຫນຂອງພວກເຮົາ ໃຫ້ກ້າວເດີນໄປຢ່າງວ່ອງໄວ ແລະ ເຂັ້ມແຂງ ຕາມເສັ້ນທາງເອກະລາດ, ເປັນເຈົ້າຕົນເອງ, ເອກະພາບ ແລະ ວັດທະນະຖາວອນ, ຮັບປະກັນໃຫ້ປະ ຊາຊົນລາວບັນດາເຜົ່າ ໄດ້ດຳລົງຊີວິດຢູ່ຢ່າງອີ່ມໜຳສຳລານ, ມີອິດສະຫຼະພາບ ແລະ ມີຄວາມຜາສຸກຕະຫຼອດການະນານ".

ເມື່ອຫວນຄືນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ແຫ່ງການສ້າງຕັ້ງລະບອບໃໝ່ ທີ່ດັງກ້ອງກັງວານໄປທົ່ວທຸກແຫ່ງຫົນໃນທົ່ວປະເທດ ແລະ ທົ່ວໂລກນັ້ນ, ພວກເຮົາມີຄວາມອາໄລອາວອນ ແລະ ຮູ້ບຸນຄຸນອັນໃຫຍ່ຫຼວງ ຕໍ່ວິລະກຳອັນລໍ້າເລີດ, ລະນຶກເຖິງຜົນງານ ແລະ ການເສຍສະຫຼະອັນຍິ່ງໃຫຍ່ຂອງປະທານ ໄກສອນ ພົມວິຫານ, ປະທານສຸພານຸວົງ ແລະ ບັນດາຜູ້ນຳ, ນັກຮົບປະຕິວັດ, ວິລະຊົນ, ສະມາຊິກພັກ-ພະນັກງານ ຕະຫຼອດຮອດປະຊາຊົນລາວບັນດາເຜົ່າ ທີ່ໄດ້ອຸທິດໃຫ້ແກ່ພາລະກິດຕໍ່ສູ້ກູ້ຊາດຢ່າງພິລະອາດຫານ, ບໍ່ຢ້ານກົວຕໍ່ຄວາມຫຍຸ້ງຍາກລຳບາກໃດໆ ຈົນສາມາດຍາດໄດ້ເອກະລາດແຫ່ງຊາດແລະປົດປ່ອຍປະເທດຊາດ ໄດ້ຢ່າງສົມບູນ ດ້ວຍສາມບາດຄ້ອນຍຸດທະສາດ ແບບບົວບໍ່ຊໍ້ານໍ້າບໍ່ຂຸ່ນ ແຕ່ສາມາດຈັບປາໄດ້.

ໃນພິທີອັນເຄັ່ງຂຶມແລະມີຄວາມໝາຍສຳຄັນນີ້, ຂ້າພະເຈົ້າຂໍຮຽນເຊີນບັນດາສະຫາຍ, ແຂກທີ່ມີກຽດ, ບັນດາທ່ານທີ່ເຂົ້າຮ່ວມພິທີຢູ່ນະທີ່ນີ້ ແລະ ຮ່ວມພິທີຢູ່ທຸກແຫ່ງໃນທົ່ວປະເທດ ຈົ່ງພ້ອມກັນລຸກຂຶ້ນກົ້ມຫົວໄວ້ອາໄລເຖິງດວງວິນຍານຂອງບັນດາສະຫາຍທີ່ລ່ວງລັບໄປແລ້ວ.

ບັນດາສະຫາຍ, ພີ່ນ້ອງຮ່ວມຊາດ ທີ່ຮັກແພງ,

ຕະຫຼອດຍ່ານທາງ 50 ປີ ແຫ່ງພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ສປປລາວ ໄດ້ກ້າວເດີນຜ່ານຜ່າອຸປະສັກ, ຄວາມຫຍຸ້ງຍາກ, ສິ່ງທ້າທາຍທົດສອບ ແລະ ການມ້າງເພທຳລາຍທຸກຮູບແບບຕໍ່ລະບອບໃໝ່. ພວກເຮົາຮັກສາໄວ້ຢ່າງໜັກແໜ້ນ ເຊິ່ງໝາກຜົນຂອງການປະຕິວັດທີ່ແລກໄດ້ມາດ້ວຍຢາດເລືອດ, ຊີວິດ ແລະ ການເສຍສະຫຼະ ບໍ່ຈັກວ່າເທົ່າໃດຂອງນັກປະຕິວັດ, ພະນັກງານ, ນັກຮົບ ແລະ ປະຊາຊົນລາວຜູ້ຮັກຊາດ ພາຍໃຕ້ການນຳພາອັນຖືກຕ້ອງສ່ອງໃສຂອງພັກປະຊາຊົນປະຕິວັດລາວ. ພວກເຮົາໄດ້ຕັ້ງໜ້າ, ເດັດດ່ຽວ ແລະ ບາກບັ່ນສູ້ຊົນສູງສຸດ ເພື່ອສະແຫວງຫາເສັ້ນທາງກ້າວເດີນທີ່ຖືກຕ້ອງ, ສອດຄ່ອງກັບເງື່ອນໄຂ, ຈຸດພິເສດຂອງລາວ ແລະ ຈາກການຖອດບົດຮຽນໃນການສ້າງສາລະບອບໃໝ່ໃນຊຸມປີທຳອິດ ໄດ້ດຳເນີນພາລະກິດປ່ຽນແປງໃໝ່ຜ່ານແນວຄິດລິເລີ່ມອັນປະດິດສ້າງ ແລະ ການຕັດສິນໃຈອັນກ້າຫານຂອງປະທານ ໄກສອນ ພົມວິຫານ, ຈົນເຖິງກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກໃນປີ 1986 ແລະ ກອງປະຊຸມໃຫຍ່ຄັ້ງຕໍ່ໆມາຂອງພັກ ໄດ້ສະຫຼຸບສັງລວມບັນຫາຕ່າງໆ ແລ້ວວາງອອກເປັນແນວທາງປ່ຽນແປງໃໝ່ທີ່ເປັນລະບົບຄົບຊຸດ, ຮອບດ້ານ, ມີຫຼັກການ ແລະ ໄດ້ເພີ່ມເຕີມເສີມຂະຫຍາຍເຖິງທຸກວັນນີ້ ແລະ ຍັງຈະສືບ ຕໍ່ຍູ້ແຮງການຈັດຕັ້ງຜັນຂະຫຍາຍສູ່ລວງເລິກຕໍ່ໆໄປ.

ເລີ່ມຈາກການປ່ຽນແປງໃໝ່ດ້ານເສດຖະກິດ ຄຽງຄູ່ກັບການປ່ຽນແປງໃໝ່ດ້ານຈິນຕະນາການ, ໄດ້ສ້າງຄວາມຮັບຮູ້ໃໝ່ດ້ານທິດສະດີ ກ່ຽວກັບສັງຄົມນິຍົມສູ່ການປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກ. ສປປລາວ ຈາກທີ່ມີຈຸດເລີ່ມຕໍ່າ ສາມາດຜ່ານຜ່າພະຍຸລົມແຮງ ແລະ ສິ່ງທ້າທາຍທົດສອບອັນລະອິດລະອ້ຽວ, ຂ້ຽວຂາດ ມາໄດ້. ພວກເຮົາສາມາດເວົ້າໄດ້ຢ່າງເອກອ້າງທະນົງໃຈວ່າ: ຊາດລາວ ຈາກປະເທດສັກດີນາ, ຫຼ້າຫຼັງ ແລະ ຕົກເປັນເມືອງສ່ວຍ, ຕົກເປັນຫົວເມືອງຂຶ້ນຂອງຕ່າງຊາດ ເປັນເວລາຫຼາຍຮ້ອຍປີນັ້ນ ໄດ້ກາຍເປັນປະເທດທີ່ມີເອກະລາດ, ອຳນາດອະທິປະໄຕຢ່າງສົມບູນ ບົນຜືນແຜ່ນດິນອັນແສນຮັກ ແລະ ປິຕຸພູມອັນຫວງແຫນຂອງປະຊາຊົນລາວບັນດາເຜົ່າ. ລະບອບປະຊາທິປະໄຕປະຊາຊົນ ໄດ້ຮັບການສ້າງຕັ້ງ, ບູລະນະ ແລະ ພັດທະນາ ໃຫ້ເຕີບໃຫຍ່ເຂັ້ມແຂງ ແລະ ມີການປ່ຽນແປງໃຫຍ່ຫຼວງທຸກດ້ານ; ຮັບປະກັນໄດ້ຄວາມໝັ້ນຄົງ ແລະ ສະຖຽນລະພາບທາງການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ ແລະ ເປັນລະບຽບຮອບຮ້ອຍ, ຄວາມສາມັກຄີເປັນປຶກແຜ່ນພາຍໃນຊາດ ໄດ້ຮັບການເຊີດຊູຍິ່ງຂຶ້ນ; ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ, ຄຸນຄ່າ, ເອກະລັກດ້ານວັດທະນະທຳອັນດີງາມຂອງຊາດ ໄດ້ຮັບການປົກປັກຮັກສາ, ເສີມຂະຫຍາຍ ກາຍເປັນມໍລະດົກອັນລໍ້າຄ່າໃຫ້ຄົນລາວເຮົາໄດ້ສືບທອດຕໍ່ໄປ; ຊີວິດຄວາມເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການເອົາໃຈໃສ່ປົວແປງ ແລະ ຍົກສູງຂຶ້ນຢ່າງບໍ່ຢຸດຢັ້ງ, ແກ້ໄຂໄດ້ຄວາມທຸກຍາກເປັນກ້າວໆ ແລະ ຈະຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາໃນປີ2026; ສປປລາວເປັນຄູ່ຮ່ວມມື-ຄູ່ຮ່ວມພັດທະນາທີ່ໄວ້ເນື້ອເຊື່ອໃຈຂອງບັນດາປະຊາຊາດ, ມີທີ່ຕັ້ງ ແລະ ບົດບາດສຳຄັນໃນຍຸດທະສາດແຫ່ງການເຊື່ອມຈອດ-ເຊື່ອມໂຍງຂອງອະນຸພາກພື້ນ, ພາກພື້ນ ແລະ ສາກົນ, ບົດບາດ, ຊື່ສຽງຂອງ ສປປລາວ ໄດ້ຮັບການເຊີດຊູສູງເດັ່ນຂຶ້ນໃນເວທີໂລກ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້,ຕາງໜ້າໃຫ້ພັກ-ລັດ ແລະ ປະຊາຊົນລາວບັນດາເຜົ່າ ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍ, ຄວາມຂອບໃຈອັນຈິງໃຈແລະຄວາມຮູ້ບຸນຄຸນອັນລົ້ນເຫຼືອ ມາຍັງປະເທດເພື່ອນມິດຜູ້ຢູ່ໃກ້ ແລະ ໄກ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ກໍຄືອົງການຈັດຕັ້ງສັງຄົມ... ທີ່ໄດ້ຕັ້ງໜ້າໃຫ້ການສະໜັບສະໜູນ, ຊ່ວຍເຫຼືອ ສປປລາວ ຕະຫຼອດໄລຍະເຄິ່ງສະຕະວັດທີ່ຜ່ານມາ ໃນພາລະກິດປົກປັກຮັກສາ ແລະ ພັດທະນາຂອງປະຊາຊົນລາວພວກເຮົາ.

ຮຽນບັນດາສະຫາຍ, ແຂກທີ່ມີກຽດ, ພີ່ນ້ອງຮ່ວມຊາດທີ່ຮັກແພງ,

50 ປີຜ່ານໄປນັ້ນແມ່ນ 50 ປີ ແຫ່ງການສ້າງຕັ້ງ, ບູລະນະ ແລະ ພັດທະນາ ສປປລາວ ຢ່າງບໍ່ຢຸດຢັ້ງ, ຖືເປັນໝາກຜົນລວມຍອດຂອງຂະບວນວິວັດແຫ່ງການຕໍ່ສູ້ອັນດຸເດືອດ, ຂ້ຽວຂາດ, ລຳບາກຍືດເຍື້ອຍາວນານທີ່ເຕັມໄປດ້ວຍນໍ້າໃຈຮັກຊາດອັນສູງສົ່ງ, ບໍ່ຍອມຈຳນົນ, ຄວາມຟົດຟື້ນປະຕິວັດ ແລະ ການເສຍສະຫຼະຂອງບັນພະບູລຸດ ແລະ ວິລະບຸລຸດຂອງຊາດລາວວິລະຊົນກໍຄືການຊ່ວຍເຫຼືອອັນລໍ້າຄ່າຂອງປະເທດເພື່ອນມິດ, ພິເສດແມ່ນຄວາມສາມັກຄີແລະການຮ່ວມສຳພັນສູ້ຮົບຂອງ 3 ຊາດອິນດູຈີນ ລາວ-ຫວຽດນາມ-ກຳປູເຈຍອ້າຍນ້ອງ ຈົນສາມາດຍາດໄດ້ໄຊຊະນະອັນຍິ່ງໃຫຍ່ ແລະ ສະຫງ່າງາມ ເຊິ່ງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກ, ລູກຜູ້ປະເສີດຂອງປະຊາຊົນລາວບັນດາເຜົ່າ ໄດ້ໃຫ້ຂໍ້ສະຫຼຸບວ່າ: "ຕໍ່ສູ້ຍາວນານ, ມີໄຊຍິ່ງໃຫຍ່".

ຕະຫຼອດໄລຍະ 50 ປີ ແຫ່ງພາລະກິດປົກປັກຮັກສາ ແລະພັດທະນາສປປລາວ, ພວກເຮົາໄດ້ຢືນຢັນຢ່າງໜັກແໜ້ນເຖິງທາດແທ້, ມູນເຊື້ອປະຕິວັດທີ່ເປັນບົດຮຽນໃຫ້ແກ່ການສືບຕໍ່ພາປະເທດກ້າວຂຶ້ນ, ນັ້ນແມ່ນ "ຢຶດໝັ້ນອຸດົມການສັງຄົມນິຍົມ, ເສີມຂະຫຍາຍມະຫາສາມັກຄີທົ່ວປວງຊົນລາວທັງຊາດ ເພື່ອບູລະນະລະບອບປະຊາທິປະໄຕປະຊາຊົນໃຫ້ເຂັ້ມແຂງ, ສ້າງລັດທີ່ມາຈາກປະຊາຊົນ ໂດຍປະຊາຊົນ ເພື່ອປະຊາຊົນ, ອຳນາດລັດທັງໝົດເປັນຂອງທົ່ວປວງຊົນລາວຢ່າງແທ້ຈິງ ແລະ ເຮັດທຸກສິ່ງທຸກຢ່າງເພື່ອຄວາມສົມບູນພູນສຸກຂອງປະຊາຊົນ" ເຊິ່ງເປັນອຸດົມການອັນເດັດດ່ຽວ, ສະເໝີຕົ້ນສະເໝີປາຍຂອງພັກເຮົາແລະເປັນຄວາມມຸ່ງຫວັງອັນແຮງກ້າຂອງປະຊາຊົນລາວບັນດາເຜົ່າທີ່ພວກເຮົາ ແລະ ຄົນຮຸ່ນໜຸ່ມຜູ້ສືບທອດ ຕ້ອງສືບຕໍ່ຢຶດໝັ້ນເພື່ອນຳພາພາລະກິດປະຕິວັດ, ນຳພາປະເທດເຮົາກ້າວຂຶ້ນສູ່ສັງຄົມນິຍົມ ຢ່າງໜັກແໜ້ນ.

ພີ່ນ້ອງຮ່ວມຊາດ, ເພື່ອນມິດ ທີ່ຮັກແພງທັງຫຼາຍ,

ຕໍ່ໜ້າສະພາບການພາກພື້ນ ແລະ ສາກົນ ທີ່ພວມ ແລະ ຈະສືບຕໍ່ຜັນແປໄປຢ່າງໄວວາ, ສັບສົນ, ເລິກເຊິ່ງ, ຮອບດ້ານ ແລະ ເຕັມໄປດ້ວຍສິ່ງທ້າທາຍທົດສອບຫຼາຍປະການນັ້ນ, ສປປລາວ ສືບຕໍ່ຢຶດໝັ້ນແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການພົວພັນຮ່ວມມືເພື່ອພັດທະນາ, ເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືກັບບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ; ໃນນີ້, ສືບຕໍ່ເພີ່ມທະວີຄວາມສາມັກຄີ, ສາຍພົວພັນອັນສະໜິດແໜ້ນກັບປະເທດເພື່ອນມິດຍຸດທະສາດ; ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ເດັດດ່ຽວຢຶດໝັ້ນເສັ້ນ ທາງການພັດທະນາທີ່ມີຄວາມສົມດູນ, ກົມກຽວລະຫວ່າງເສດຖະກິດກັບວັດທະ

ອ່ານຕໍ່ໜ້າ 12

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ດັ່ງກ່າວ ໄດ້ເປີດຂຶ້ນໃນຕອນເຊົ້າວັນທີ 11 ແລະ ອັດລົງໃນຕອນແລງວັນທີ 12 ທັນວາ 2025 ທີ່ສຳນັກງານນາຍົກລັດຖະມົນຕີ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ເຊິ່ງມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຜູ້ຕາງໜ້າກະຊວງ-ອົງການເຂົ້າຮ່ວມແບບເຊິ່ງໜ້າ; ການນຳຂອງນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເຂົ້າຮ່ວມຜ່ານລະບົບກອງປະຊຸມທາງໄກ ເພື່ອຮັບຟັງແລະປະກອບຄຳເຫັນຕໍ່ການລາຍງານສະພາບພົ້ນເດັ່ນປະຈຳເດືອນພະຈິກ ແລະ ທິດທາງແຜນວຽກຈຸດສຸມ ປະຈຳເດືອນທັນວາ 2025.

ກອງປະຊຸມຄັ້ງນີ້ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນແລະພິຈາລະນາຮັບຮອງເອົາບັນດາຫົວຂໍ້ສຳຄັນຄື:

ວາລະທີ 1: ສະຫຼຸບວຽກງານພົ້ນເດັ່ນປະຈຳເດືອນພະຈິກ ແລະ ທິດທາງແຜນການປະຈຳເດືອນທັນວາ 2025 ຂອງລັດຖະບານ; ລາຍງານສະພາບພົ້ນເດັ່ນໃນພາກພື້ນ ແລະ ສາກົນ, ສະພາບພົ້ນເດັ່ນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ລາຍງານການເກັບຂໍ້ມູນ ແລະ ຜົນການສຶກສາຕັ້ງດ່ານເກັບເງິນຄ່າບໍລິການຜ່ານທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ ໃນກິໂລແມັດທີ 71-346 (ໄລຍະທາງ 275 ກິໂລແມັດ) ແລະ ທາງຫຼວງແຫ່ງຊາດເລກທີ 12 ແຕ່ທ່າແຂກ-ຊາຍແດນລາວ-ຫວຽດນາມ (ໄລຍະທາງ 143 ກິໂລແມັດ).

ໃນນັ້ນ: ຕໍ່ການສະຫຼຸບວຽກງານພົ້ນເດັ່ນປະຈຳເດືອນພະຈິກ 2025 ຂອງລັດຖະບານ: ເຫັນວ່າ ເຖິງສະພາບການພາກພື້ນ ແລະ ສາກົນ ຍັງສືບຕໍ່ຜັນແປໄປຢ່າງສັບສົນ ແລະ ຄາດເດົາໄດ້ຍາກ, ແຕ່ລັດຖະບານໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍທີ່ລະບຸໄວ້ໃນບັນດາມະຕິສະພາແຫ່ງຊາດ, ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ຕາມມະຕິກອງປະຊຸມລັດຖະບານເປີດກວ້າງຄັ້ງທີ I ປີ 2025 ມີຜົນສຳເລັດຫຼາຍດ້ານ ເປັນຕົ້ນ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ເຮັດໃຫ້ທົ່ວປະເທດ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ປາກົດການຫຍໍ້ທໍ້ໃນສັງຄົມ ສືບຕໍ່ໄດ້ຮັບການແກ້ໄຂເປັນກ້າວໆ, ສາມາດເກັບລາຍຮັບເຂົ້າງົບປະມານໄດ້ 66,484 ຕື້ກີບ ເທົ່າກັບ 98% ຂອງແຜນປີ, ການປະຕິບັດແຜນລາຍຈ່າຍໄດ້ 53,771 ຕື້ກີບ ເທົ່າກັບ 75% ຂອງແຜນປີ, ອັດຕາເງິນເຟີ້ 4.8% ສະເລ່ຍ 11 ເດືອນ 2025 ຢູ່ໃນລະດັບ 7.9%, ສາມາດປະຕິບັດແຜນລາຍຈ່າຍເງິນເດືອນ-ເງິນນະໂຍບາຍຕ່າງໆໄດ້ພຽງພໍ, ສາມາດຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດຕາມຂໍ້ຜູກພັນສັນຍາ; ໄດ້ສຸມໃສ່ປະຕິບັດມາດຕະການດ້ານການຄ້າ ໂດຍສະເພາະການຄຸ້ມຄອງລາຄາສິນຄ້າ, ຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າ ເຂັ້ມງວດຫຼາຍຂຶ້ນ; ໄດ້ສຸມໃສ່ການຜະລິດກະສິກຳ ເພື່ອຄ້ຳປະກັນສະບຽງອາຫານ, ການຜະລິດເພື່ອທົດແທນການນຳເຂົ້າ ແລະ ການຜະລິດເພື່ອສົ່ງອອກ ໂດຍສາມາດສົ່ງອອກສິນຄ້າກະສິກຳ-ປ່າໄມ້, ສັດ ແລະ ຜະລິດຕະພັນສັດ ມູນຄ່າ 102 ລ້ານກວ່າໂດລາສະຫະລັດ; ໄດ້ສຸມໃສ່ແກ້ໄຂສະພາບຂາດເຂີນໄຟຟ້າ ໂດຍເລັ່ງສ້າງພະລັງງານແສງຕາເວັນ ແລະ ຊຸກຍູ້ໂຄງການພະລັງງານໄຟຟ້າທີ່ໄດ້ຮັບອະນຸມັດແລ້ວ ໃຫ້ດຳເນີນການກໍ່ສ້າງສຳເລັດຕາມແຜນ; ໄດ້ສືບຕໍ່ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງເສັ້ນທາງທົ່ວປະເທດ ໃຫ້ມີຄວາມຄືບໜ້າໄວ ໂດຍສຸມໃສ່ປະຕິບັດໂຄງການທີ່ເປັນບູລິມະສິດຂອງລັດຖະບານ ເປັນຕົ້ນ ໂຄງການກໍ່ສ້າງທາງດ່ວນ ນະຄອນຫຼວງວຽງຈັນ-ຮ່າໂນ້ຍ, ໂຄງການຟື້ນຟູທາງຫຼວງທີ່ເປ່ເພຈາກໄພທຳມະຊາດ, ໂຄງການຍົກລະດັບທາງຫຼວງແຫ່ງຊາດສາຍຕ່າງໆ, ລວມທັງໂຄງການກໍ່ສ້າງຂົວ, ປັບປຸງດ່ານຊາຍແດນ ແລະ ອື່ນໆ ເພື່ອສາມາດສັນຈອນໄປ-ມາໄດ້ສະດວກ, ທັງເຊື່ອມຈອດເຊື່ອມໂຍງພາຍໃນພາກພື້ນ ແລະ ສາກົນ ເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ; ໄດ້ສຸມໃສ່ຂຶ້ນທະບຽນ ແລະ ອອກໃບຕາດິນ ມີຄວາມຄືບໜ້າເປັນກ້າວໆ; ໄດ້ເອົາໃຈໃສ່ພັດທະນາສີມືແຮງງານ, ຄຸ້ມຄອງ ແລະ ສົ່ງເສີມແຮງງານພາຍໃນເຂົ້າສູ່ຕະຫຼາດແຮງງານ ທັງພາຍໃນ ແລະ ຕ່າງປະເທດ; ສຳເລັດການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີ ໃນພາລະກິດປະຕິວັດຊາດ ປະຊາທິປະໄຕ ໃນງວດ 4 ປີ 2025 ຈຳນວນ 272 ທ່ານ ເປັນເງິນ 5 ຕື້ກວ່າກີບ; ໄດ້ສືບຕໍ່ໃຫ້ຄວາມຊ່ວຍເຫຼືອແກ່ບັນດາແຂວງທີ່ໄດ້ຮັບຜົນກະທົບຈາກໄພພິບັດໃນໄລຍະຜ່ານມາ ເປັນຕົ້ນ ສະໜອງງົບປະມານເພື່ອຊຳລະໂຄງການຟື້ນຟູສຸກເສີນແລະປັດໄຈອື່ນໆ; ສຳເລັດການຈັດງານບຸນນະມັດສະການພະທາດຫຼວງວຽງຈັນ ແລະ ງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII; ໄດ້ເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງ, ສະຖານທີ່ ແລະ ຄຸນນະພາບ ການບໍລິການສາທາລະນະສຸກ ຕາມທິດ 5 ດີ 1 ພໍໃຈ; ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຕ່າງປະເທດຢ່າງມີໄຫວພິບ ເຊິ່ງພົ້ນເດັ່ນແມ່ນສຳເລັດການຕ້ອນຮັບການມາຢ້ຽມຢາມທາງລັດຖະກິດຂອງສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ການຕ້ອນຮັບສົມເດັດເຈົ້າຍິງ ໄອໂກະ ແຫ່ງປະເທດຍີ່ປຸ່ນ, ການຕ້ອນຮັບການນຳຂັ້ນສູງ ແລະ ອົງການຈັດຕັ້ງຕ່າງໆທີ່ເຂົ້າພົບປະ, ອວຍພອນ ແລະ ເຂົ້າຮ່ວມພິທີເດີນສວນສະໜາມສະເຫຼີມສະຫຼອງວັນສະຖາປະນາ ສປປລາວ ຄົບຮອບ 50 ປີ, ສຳເລັດກອງປະຊຸມພົບປະສອງກົມການເມືອງລະຫວ່າງພັກປະຊາຊົນປະຕິວັດລາວແລະພັກກອມມູນິດຫວຽດນາມ, ກອງປະຊຸມຄັ້ງທີ 48 ຂອງຄະນະກຳມະການຮ່ວມມືທະວິພາຄີ ລະຫວ່າງລັດຖະບານລາວ ແລະ ຫວຽດນາມ, ກອງປະຊຸມພົບປະນັກທຸລະກິດ ລາວ-ຫວຽດນາມ, ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV ແລະ ອື່ນໆ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວນັ້ນ ກໍຍັງມີວຽກງານຈຳນວນໜຶ່ງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂໃຫ້ມີການຫັນປ່ຽນດີຂຶ້ນກວ່າເກົ່າ ເປັນຕົ້ນ ບັນຫາປາກົດການຫຍໍ້ທໍ້ຕ່າງໆ ແລະ ຫາງສຽງບໍ່ດີໃນສັງຄົມ, ບັນຫາຄ່າຄອງຊີບ, ລາຄາສິນຄ້າ, ອັດຕາແລກປ່ຽນ, ຕົ້ນທຶນການຜະລິດ, ການພັດທະນາ-ປັບປຸງພື້ນຖານໂຄງລ່າງເສັ້ນທາງ, ການຄຸ້ມຄອງການຂຸດຄົ້ນແຮ່ທາດ, ການຄຸ້ມຄອງ ແລະ ແກ້ໄຂບັນຫາຂ່າວບິດເບືອນຜ່ານສື່ສັງຄົມອອນລາຍ, ການເຄົາລົບກົດໝາຍ-ລະບຽບການແລະອື່ນໆ.

ສຳລັບທິດທາງແຜນວຽກຈຸດສຸມປະຈຳເດືອນທັນວາ 2025 ກອງປະຊຸມໄດ້ຊີ້ນຳຂະແໜງການ, ທ້ອງຖິ່ນແລະພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ບັນດາວຽກງານສຳຄັນດັ່ງນີ້:

ສືບຕໍ່ປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ສຸມໃສ່ລົງກໍ່ສ້າງຮາກຖານການເມືອງ-ພັດທະນາຊົນນະບົດ, ແກ້ໄຂຄວາມຫຍຸ້ງຍາກຂອງປະຊາຊົນ ຕິດພັນວຽກງານ 3 ສ້າງ; ແກ້ໄຂປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ ໃຫ້ຫຼຸດໜ້ອຍຖອຍລົງ; ຕິດຕາມກຳແໜ້ນສະພາບການ ແລະ ແກ້ໄຂຕອບໂຕ້ຂ່າວປອມທີ່ສ້າງຄວາມປັ່ນປ່ວນຢ່າງເປັນລະບົບທັນການ; ແກ້ໄຂອາວຸດທີ່ນຳໃຊ້ບໍ່ຖືກຕ້ອງ; ເອົາໃຈໃສ່ຕິດຕາມການເຂົ້າ-ອອກເມືອງຂອງຄົນຕ່າງດ້າວ; ແກ້ໄຂບັນຫາສະແກມເມີ, ແກ້ງຄຳເຊັນເຕີ...; ສືບຕໍ່ປະຕິບັດແຜນຮັກສາຄວາມສະຫງົບ ແລະ ປອດໄພ ໃຫ້ແກ່ການຈັດງານສຳຄັນຕ່າງໆຂອງຊາດ ແລະ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ.

ສຸມໃສ່ກະກຽມຄວາມພ້ອມດ້ານຕ່າງໆໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XII ຂອງພັກ, ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V.

ສຸມໃສ່ກະກຽມກອງປະຊຸມລັດຖະບານເປີດກວ້າງ ຄັ້ງທີ II ປີ 2025 ຕາມຫົວຂໍ້ທີ່ກຳນົດໄວ້.

ສືບຕໍ່ສຸມໃສ່ປະຕິບັດບັນດາມາດຕະການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ-ການເງິນ ໂດຍສະເພາະອັດຕາເງິນເຟີ້, ການເກັບລາຍຮັບ, ການເກັບກູ້ໜີ້ສິນ, ການແກ້ໄຂໜີ້ສິນ; ສຸມໃສ່ສົ່ງເສີມການຜະລິດສິນຄ້າ ຕິດພັນກັບການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໃຫ້ແຂງແຮງ ໄປຄຽງຄູ່ກັບຈຳກັດການນຳເຂົ້າສິນຄ້າຟຸ່ມເຟືອຍ ແລະ ອື່ນໆ.

ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ຕາມມະຕິຂອງຄະນະບໍລິຫານງານສູນກາງພັກ ເລກທີ 03/ຄບສພ ແລະ ມະຕິຂອງສະພາແຫ່ງຊາດ ເລກທີ 05/ສພຊ ໂດຍສະເພາະການສ້າງຕັ້ງຕາແສງໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງປີ 2025 ແລະ ນິຕິກຳອື່ນໆ ໃຫ້ສຳເລັດຕາມແຜນ.

ສຸມໃສ່ກວດກາຄືນຕົວເລກຄູໃນທົ່ວປະເທດໃຫ້ຊັດເຈນ ແລະ ຄິດໄລ່ເງິນເດືອນຄູຕາມທິດການປັບປຸງເງິນເດືອນໃໝ່ຂອງລັດຖະບານ ໃຫ້ສຳເລັດທັນການເບີກເງິນເດືອນໃໝ່ໃນເດືອນມັງກອນ 2026 ໄປຄຽງຄູ່ກັບການປັບປຸງນິຕິກຳທີ່ກ່ຽວຂ້ອງ; ສືບຕໍ່ສຸມໃສ່ກະກຽມຄວາມພ້ອມສຳລັບການປັບປຸງລະບົບສາມັນສຶກສາ.

ສືບຕໍ່ຊຸກຍູ້ສົ່ງເສີມການທ່ອງທ່ຽວໃຫ້ແຂງແຮງຂຶ້ນກວ່າເກົ່າ.

ສືບຕໍ່ຕິດຕາມຊຸກຍູ້ຫົວໜ່ວຍນຳໃຊ້ແຮງງານ ແລະ ແຮງງານ ຢູ່ບັນດາເຂດເສດຖະກິດພິເສດ, ເຂດອຸດສາຫະກຳ, ນິຄົມອຸດສາຫະກຳ ໃຫ້ເຄື່ອນໄຫວຖືກຕ້ອງຕາມກົດໝາຍຢ່າງເຄັ່ງຄັດ; ສືບຕໍ່ພັດທະນາສີມືແຮງງານລາວໃຫ້ມີຄຸນນະພາບ; ກວດກາຄືນຕົວເລກຄາດໝາຍໃນການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານໃນຊຸມປີຕໍ່ໜ້າ ໃຫ້ລະອຽດ.

ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງໃນໄລຍະໃໝ່; ສືບຕໍ່ສຸມໃສ່ຊຸກຍູ້ບັນດາໂຄງການກໍ່ສ້າງເສັ້ນທາງບູລິມະສິດ; ປັບປຸງບູລະນະ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນໃນຂອບເຂດທົ່ວປະເທດ ໃຫ້ສຳເລັດຕາມແຜນ; ຮີບຮ້ອນສົມທົບປຶກສາຫາລືໃຫ້ເປັນເອກະພາບກັນ ກ່ຽວກັບການກຳນົດຮູບແບບ, ວິທີການ ແລະ ອັດຕາການເກັບຄ່າຜ່ານທາງທີ່ມອບໃຫ້ຜູ້ປະກອບການເປັນຜູ້ສ້ອມແປງ ແລະ ບົວລະບັດຮັກສາ.

ຮີບຮ້ອນຜັນຂະຫຍາຍຜົນກອງປະຊຸມພົບປະປະຈຳປີ 2026 ລະຫວ່າງສອງກົມການເມືອງ ລາວ-ຫວຽດນາມ, ກອງປະຊຸມຄັ້ງທີ 48 ຂອງຄະນະກຳມະການຮ່ວມມືທະວິພາຄີ ລະຫວ່າງສອງລັດຖະບານ ລາວ ແລະ ຫວຽດນາມ ໂດຍໃຫ້ກຳນົດໜ້າວຽກ ແລະ ແບ່ງຄວາມຮັບຜິດຊອບລະອຽດ; ສືບຕໍ່ກະກຽມຮອບດ້ານໃຫ້ແກ່ການນຳຂັ້ນສູງຂອງພັກ-ລັດ ໄປເຄື່ອນໄຫວວຽກງານຢູ່ຕ່າງປະເທດ.

ວາລະທີ 2: ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາຮ່າງນິຕິກຳ ຈຳນວນ 7 ສະບັບ ຄື: 1) ຮ່າງດຳລັດວ່າດ້ວຍການປັບໃໝ ແລະ ການນຳໃຊ້ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຊັບສິນຂອງລັດ; 2) ຮ່າງດຳລັດວ່າດ້ວຍເງິນເດືອນ, ຜົນປະໂຫຍດ ແລະນະໂຍບາຍອື່ນຕໍ່ສະມາຊິກຂອງສຳນັກງານຜູ້ຕາງໜ້າ; 3) ຮ່າງດຳລັດວ່າດ້ວຍການສະກັດກັ້ນແລະແກ້ໄຂວິກິດການຂອງລະບົບການເງິນ; 4) ຮ່າງດຳລັດວ່າດ້ວຍການປັບໃໝແລະມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການຄວບຄຸມຢາສູບ; 5) ຮ່າງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງນ້ຳແຫ່ງຊາດ; 6) ຮ່າງດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານການພັດທະນາ; ແລະ 7) ຮ່າງດຳລັດວ່າດ້ວຍຝຸ່ນ. ກອງປະຊຸມໄດ້ຊີ້ນຳໃຫ້ພາກສ່ວນກ່ຽວຂ້ອງ ນຳເອົາບັນດາຮ່າງນິຕິກຳດັ່ງກ່າວໄປປັບປຸງຕາມການປະກອບຄຳເຫັນຂອງສະມາຊິກລັດຖະບານ ເປັນຕົ້ນ: ຊື່ຂອງບາງຮ່າງດຳລັດ, ການກຳນົດຈຸດປະສົງ, ການອະທິບາຍຄຳສັບ, ການນຳໃຊ້ຄຳສັບ, ໂຄງຮ່າງນິຕິກຳ, ການກຳນົດ ແລະ ຈັດລຽງເນື້ອໃນ ໃຫ້ຄົບຖ້ວນສົມບູນ, ຈະແຈ້ງ, ຮັດກຸມ, ສອດຄ່ອງກັບກົດໝາຍ, ນິຕິກຳກ່ຽວຂ້ອງ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງສົນທິສັນຍາສາກົນທີ່ ສປປລາວ ເປັນພາຄີ, ສິ່ງສຳຄັນ ຕ້ອງສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**(ຂ່າວ: ທສນຍ)**

## ຊົມເຊີຍ...

(ຕໍ່ຈາກໜ້າ 2)

ໜູຮັກ ພູມສະຫວັນ ເປັນປະທານສະພາປະຊາຊົນສູງສຸດ ແລະ ມີຮອງປະທານສະພາປະຊາຊົນສູງສຸດ 1 ທ່ານ; ມີຄະນະປະຈຳ 6 ທ່ານ ແລະ ປະກອບມີ 5 ກຳມາທິການ.

ສະພາແຫ່ງຊາດ ຊຸດທີ III ໄດ້ເລືອກຕັ້ງເອົາທ່ານ ສະໝານ ວິຍະເກດ ເປັນປະທານສະພາແຫ່ງຊາດ ແລະ ມີຮອງປະທານສະພາແຫ່ງຊາດ 2 ທ່ານ; ມີຄະນະປະຈຳ 7 ທ່ານ ແລະ ປະກອບມີ 6 ກຳມາທິການ.

ສະພາແຫ່ງຊາດ ຊຸດທີ IV ໄດ້ເລືອກຕັ້ງເອົາທ່ານ ສະໝານ ວິຍະເກດ ສືບຕໍ່ເປັນປະທານສະພາແຫ່ງຊາດ ແລະ ມີຮອງປະທານສະພາແຫ່ງຊາດ 3 ທ່ານ, ຍິງ 1 ທ່ານ; ມີຄະນະປະຈຳ 7 ທ່ານ, ຍິງ 2 ທ່ານ ແລະ ປະກອບມີ 6 ກຳມາທິການ.

ສະພາແຫ່ງຊາດ ຊຸດທີ V ໄດ້ເລືອກຕັ້ງເອົາທ່ານ ສະໝານ ວິຍະເກດ ສືບຕໍ່ເປັນປະທານສະພາແຫ່ງຊາດ ແລະ ມີຮອງປະທານສະພາແຫ່ງຊາດ 2 ທ່ານ, ຍິງ 1 ທ່ານ; ມີຄະນະປະຈຳ 7 ທ່ານ, ຍິງ 1 ທ່ານ ແລະ ປະກອບມີ 6 ກຳມາທິການ.

ສະພາແຫ່ງຊາດ ຊຸດທີ VI ໄດ້ເລືອກຕັ້ງເອົາທ່ານ ທອງສິງ ທຳມະວົງ ເປັນປະທານສະພາແຫ່ງຊາດ ແລະ ມີຮອງປະທານສະພາແຫ່ງຊາດ 2 ທ່ານ, ຍິງ 1 ທ່ານ; ມີຄະນະປະຈຳ 9 ທ່ານ, ຍິງ 2 ທ່ານ ແລະ ປະກອບມີ 6 ກຳມາທິການ.

ສະພາແຫ່ງຊາດ ຊຸດທີ VII ໄດ້ເລືອກຕັ້ງເອົາທ່ານ ນາງ ປານີ ຢາທໍ່ຕູ້ ເປັນປະທານສະພາແຫ່ງຊາດ ແລະ ມີຮອງປະທານສະພາແຫ່ງຊາດ 2 ທ່ານ; ມີຄະນະປະຈຳ 10 ທ່ານ, ຍິງ 2 ທ່ານ ແລະປະກອບມີ 6 ກຳມາທິການ.

ສະພາແຫ່ງຊາດ ຊຸດທີ VIII ໄດ້ເລືອກຕັ້ງເອົາທ່ານ ນາງ ປານີ ຢາທໍ່ຕູ້ ສືບຕໍ່ເປັນປະທານສະພາແຫ່ງຊາດ ແລະ ມີຮອງປະທານສະພາແຫ່ງຊາດ 4 ທ່ານ, ຍິງ 1 ທ່ານ.;ມີຄະນະປະຈຳ 14 ທ່ານ, ຍິງ 5 ທ່ານ ແລະ ປະກອບມີ 8 ກຳມາທິການ ແລະ ຄະນະເລຂາທິການສະພາແຫ່ງຊາດ.

ສະພາແຫ່ງຊາດ ຊຸດທີ IX (ຊຸດປັດຈຸບັນ) ໄດ້ເລືອກຕັ້ງເອົາທ່ານ ປອ. ໄຊສົມພອນ ພົມວິຫານ ເປັນປະທານສະພາແຫ່ງຊາດ ແລະ ມີຮອງປະທານສະພາແຫ່ງຊາດ 5 ທ່ານ, ຍິງ 1 ທ່ານ; ມີຄະນະປະຈຳ 16 ທ່ານ, ຍິງ 4 ທ່ານ ແລະ ປະກອບມີ 9 ກຳມາທິການ.

ສັງລວມແລ້ວ, ການເຄື່ອນໄຫວຕະຫຼອດໄລຍະ 50 ປີ ຂອງສະພາແຫ່ງຊາດ ໄປຄຽງຄູ່ກັບການເຕີບໃຫຍ່ຂະຫຍາຍຕົວຂອງ ສປປລາວ ອັນໄດ້ປະກອບສ່ວນສຳຄັນ ເຂົ້າໃນການເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນຂອງທົ່ວປວງຊົນລາວທັງຊາດ ພາຍໃຕ້ການນຳພາຂອງພັກ ກໍຄືການສືບຕໍ່ສ້າງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງເຂົ້າໃນພາລະກິດສ້າງສາພັດທະນາປະເທດຊາດຂອງພວກເຮົາ ຕາມຈຸດໝາຍສັງຄົມນິຍົມ.




# ໝ້ຽງເກີດຈາກເຫຼັກ

# ດົ້ນກົບເມກ

ການຈະຮັກສາເນື້ອເຫຼັກໄວ້ໄດ້ ຜູ້ເປັນເຈົ້າຂອງຕ້ອງຮູ້ຄຸນຄ່າ ແລະ ມີຄວາມຮູ້ເຖິງວິທີຮັກສາ-ປ້ອງກັນບໍ່ໃຫ້ໝ້ຽງກັດກິນເນື້ອເຫຼັກຈົນຜຸພັງຂາດກິ້ນໄປຕາມການເວລາ, ສຳລັບບັນຫາຂີ້ໝ້ຽງ ແລະ ເຫຼັກ ເບິ່ງຄືວ່າມັນເປັນຂອງຄູ່ກັນ ເພາະຜູ້ໜຶ່ງຄື: ຄົນດີ ແລະ ອີກຜູ້ໜຶ່ງ ປຽບຄືທາກ ແລະ ປີງ ຄອຍດູດກືນກິນກັນໃນໂຕ; ດັ່ງນັ້ນ, ຜູ້ທີ່ເປັນເຈົ້າຂອງເຫຼັກຢາກຮັກສາເຫຼັກໃຫ້ຢູ່ຄົງຍືນນານ ຕ້ອງຮູ້ວິທີກຳຈັດຂີ້ໝ້ຽງອອກໃຫ້ໄດ້!

ເລື່ອງຂີ້ໝ້ຽງ ແລະ ເຫຼັກ ສາມາດປຽບໃສ່ວົງຈອນຊີວິດຄົນເຮົາໃນສັງຄົມໄດ້, ສາມາດປຽບໃສ່ຄົນຜູ້ໜຶ່ງ ຖ້າວ່າຢາກພັດທະນາຊີວິດໃຫ້ດີຂຶ້ນ ກໍຕ້ອງມີລະບຽບວິໄນ, ຫຼີກເວັ້ນອະບາຍະມຸກ, ຮັກສາສຸຂະພາບ ເພາະບັນດາອະບາຍະມຸກຕ່າງໆນັ້ນ ປຽບຄືຂີ້ໝ້ຽງກັດກິນສ່ວນດີຂອງຊີວິດຄົນເຮົາ ໃຫ້ເພພັງເທື່ອລະໜ້ອຍແບບບໍ່ຮູ້ສຶກໂຕກໍມີຫຼາຍ; ຜິດຕິກຳສ່ວນບຸກຄົນ ຖ້າວ່າຈະສ້າງໂຕເອງໃຫ້ເຂັ້ມແຂງ ຕ້ອງຟອກຈິດໃຈແນວຄິດໃຫ້ສະອາດປອດໃສ, ບໍ່ໃຫ້ມີຂີ້ໝ້ຽງໃນຫົວສະໝອງຄອຍກັດກິນພະລັງງານບວກໃຫ້ສູນເສຍ ເຊິ່ງຖ້າວ່າຜູ້ກ່ຽວບໍ່ສາມາດຄວບຄຸມໄດ້ກໍເທົ່າກັບວ່າຝ່າຍແພ້ໝູ່ມານ ທີ່ປຽບຄືຕົ້ນຫາເປັນໄຟເຜົາຜານສິ່ງທີ່ເປັນກຸສົນໃຫ້ສູນເສຍ, ກົງກັນຂ້າມ ສິ່ງທີ່ບໍ່ດີຈະເກີດແຊກແຜ່ລາມໄວວາ. ເລື່ອງຂີ້ໝ້ຽງນີ້ ອັນຕະລາຍ ຖ້າວ່າໃນກົງຈັກການຈັດຕັ້ງໃດໜຶ່ງ ມີຄົນເປັນຂີ້ໝ້ຽງກັດກິນຜົນງານຄົນອື່ນ, ຢາກໂຊແຕ່ໜ້າຕາ ແຕ່ບໍ່ລົງມືເຮັດ, ຜູ້ເປັນຫົວໜ້າຕ້ອງໄດ້ຫາທາງແກ້ໄຂດ່ວນ.

ສັງລວມໄດ້ວ່າ: ທຸກວັນທຸກເດືອນ ຫຼືທຸກປີ ຄົນເຮົາຕ້ອງໄດ້ກວດກາແນວຄິດຈິດໃຈ ຟອກຂັດໃຫ້ມັນປອດໃສຂາວສະອາດ ບໍ່ປະປ່ອຍໃຫ້ຂີ້ໝ້ຽງມັນແຊກຊຶມກັດກິນຄືທາກຄືປີງ; ບໍ່ດັ່ງນັ້ນ, ອະນາຄົດຈະເພພັງສິ້ນສຸດຄວາມຫວັງ ຍ້ອນຂີ້ໝ້ຽງເກີດຈາກຂ້າງໃນນັ້ນເອງ!.





## ປະທານ...

(ຕໍ່ຈາກໜ້າ 1)

ເນື່ອງໃນໂອກາດນຳພາຄະນະຜູ້ແທນຂັ້ນສູງ ພັກ, ລັດ ແຫ່ງ ສປຈີນ ມາເຂົ້າຮ່ວມການສະເຫຼີມສະຫຼອງວັນສະຖາປະນາ ສປປລາວ ຄົບຮອບ 50 ປີ.

ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ຕີລາຄາສູງຕໍ່ການເຂົ້າຮ່ວມພິທີດັ່ງກ່າວຂອງສະຫາຍ ຫວັງ ຮູ ໜິງ ພ້ອມດ້ວຍຄະນະ ເຊິ່ງເປັນການໃຫ້ຄວາມສຳຄັນ, ກຳລັງໃຈອັນແຮງກ້າ ແລະ ສະໜັບສະໜູນ ສປປລາວທັງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດ ຮອບດ້ານ, ໝັ້ນຄົງ ແລະ ຍາວນານ ຕາມທິດ 4 ດີ ກໍຄືການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ນັບເປັນຮູບປະທຳຍິ່ງໆຂຶ້ນ.ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດອັນໃຫຍ່ຫຼວງຮອບດ້ານທີ່ປະຊາຊົນຈີນອ້າຍນ້ອງຍາດມາໄດ້ ພາຍໃຕ້ການນຳພາອັນເດັດດ່ຽວໜຽວແໜ້ນຂອງພັກກອມມູນິດຈີນອັນມີສະຫາຍເລຂາທິການໃຫຍ່, ປະທານປະເທດ ສີ ຈິ້ນຜິງ ເປັນແກນກາງ ໂດຍສະເພາະແມ່ນຜົນສຳເລັດໃນພາລະກິດສ້າງສາພັດທະນາສັງຄົມນິຍົມຕາມສີສັນພິເສດຂອງຈີນ; ບັນດາຂໍ້ລິເລີ່ມຕ່າງໆຂອງ ສປຈີນເປັນຕົ້ນແມ່ນຂໍ້ລິເລີ່ມ“ໜຶ່ງແລວ ໜຶ່ງເສັ້ນທາງ” ແລະ ຂໍ້ລິເລີ່ມວ່າດ້ວຍ “ຄວາມໝັ້ນຄົງໃນທົ່ວໂລກ” ເຊິ່ງໄດ້ຮັບການຕອບຮັບຢ່າງກວ້າງຂວາງຈາກນາໆປະເທດໃນທົ່ວໂລກ ເຮັດໃຫ້ ສປຈີນ ມີບົດບາດ ແລະ ອິດທິພົນສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ. ສະຫາຍ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ແຈ້ງໃຫ້ຝ່າຍຈີນຊາບສະພາບພົ້ນເດັ່ນຂອງ ສປປລາວ ໂດຍສະເພາະແມ່ນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ10ຂອງສະພາແຫ່ງຊາດ ຊຸດທີ IX ແລະ ແຈ້ງໃຫ້ຊາບກ່ຽວກັບການກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີV ໃນຕົ້ນປີໜ້ານີ້.

ສອງຝ່າຍໄດ້ເປັນເອກະພາບກັນຕີລາຄາສູງທີ່ເຫັນວ່າການພົວພັນຮ່ວມມືລະຫວ່າງສອງປະເທດ ໄດ້ຮັບການເສີມຂະຫຍາຍເປັນຢ່າງດີມາໂດຍຕະຫຼອດ ທັງທາງດ້ານການເມືອງ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານການຕ່າງປະເທດ, ການພັດທະນາຊັບພະຍາກອນມະນຸດ, ເສດຖະກິດ, ການຄ້າ, ການລົງທຶນ, ການຄົມມະນາຄົມຂົນສົ່ງ, ການທ່ອງທ່ຽວ ແລະ ວັດທະນະທຳ; ພິເສດ, ເສັ້ນທາງລົດໄຟຄວາມໄວສູງລາວ-ຈີນເປີດນຳໃຊ້ມາເປັນເວລາ 4 ປີ ລ້ວນໄດ້ສ້າງຜົນປະໂຫຍດອັນໃຫຍ່ຫຼວງຕໍ່ການພັດທະນາເສດຖະກິດ-ສັງຄົມຂອງ ສປປລາວ, ໄດ້ປ່ຽນປະເທດລາວຈາກປະເທດບໍ່ມີທາງອອກສູ່ທະເລເປັນປະເທດເຊື່ອມຈອດແລະເຊື່ອມໂຍງທີ່ແທ້ຈິງ. ສອງຝ່າຍໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືທີ່ເປັນມູນເຊື້ອອັນດີງາມມາແຕ່ດົນນານລະຫວ່າງສອງອົງການນິຕິບັນຍັດໃນໄລຍະຜ່ານມາ ແລະ ເຫັນດີສືບຕໍ່ຊຸກຍູ້ເສີມຂະຫຍາຍການພົວພັນຮ່ວມມືອັນເປັນມູນເຊື້ອໃນຂົງເຂດຕ່າງໆ ລະຫວ່າງ ສປປລາວ ແລະ ສປຈີນໃນຕໍ່ໜ້າໃຫ້ເປັນຮູບປະທຳ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດຍິ່ງໆຂຶ້ນ.

ສະຫາຍ ຫວັງ ຮູ ໜິງ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນຂອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະທັງສະແດງຄວາມຊົມເຊີຍຕໍ່ຜົນສຳເລັດທີ່ປະຊາຊົນລາວຍາດມາໄດ້ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ຕະຫຼອດໄລຍະຜ່ານມາ, ສະແດງຄວາມຊົມເຊີຍວັນສະຖາປະນາ ສປປລາວ ຄົບຮອບ 50 ປີ, ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດການເຄື່ອນໄຫວຂອງສະພາແຫ່ງຊາດ ຊຸດທີ IX ແລະ ອວຍພອນໃຫ້ສະພາແຫ່ງຊາດ ປະສົບຜົນສຳເລັດໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ທີ່ຈະມີຂຶ້ນໃນອະນາຄົດອັນໃກ້ນີ້.

## ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ); ມີບັນດາທ່ານກຳມະການ ຄລຊ ພ້ອມດ້ວຍເລຂາຄະນະບໍລິຫານງານພັກແຂວງ-ນະຄອນຫຼວງ, ປະທານສະພາປະຊາຊົນຂັ້ນແຂວງ (ສພຂ), ຫົວໜ້າຄະນະຈັດຕັ້ງ, ຫົວໜ້າຄະນະໂຄສະນາອົບຮົມ, ປະທານແນວລາວສ້າງຊາດ, ປະທານອົງການກວດກາພັກ-ລັດ, ຫົວໜ້າຫ້ອງວ່າການປົກຄອງ ແຂວງ-ນະຄອນຫຼວງ, ເລຂາທິການ ສພຂ, ເລຂາຄະນະບໍລິຫານງານພັກເມືອງ-ນະຄອນ ໃນທົ່ວປະເທດ ເຂົ້າຮ່ວມຫຼາຍກວ່າ 300 ທ່ານ.

ທ່ານ ປອ. ໄຊສົມພອນ ພົມວິຫານ ກ່າວວ່າ: ການເຝິກອົບຮົມຄັ້ງນີ້ ເພື່ອເຮັດໃຫ້ການກະກຽມແລະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຖືກຕ້ອງຕາມເນື້ອໃນ, ຈິດໃຈຂອງມະຕິກົມການເມືອງສູນກາງພັກ ວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ແລະ ສອດຄ່ອງຕາມກົດໝາຍກຳນົດໄວ້; ເພື່ອເຊື່ອມຊຶມບັນດາເອກະສານກ່ຽວກັບການເລືອກຕັ້ງ,ແນະນຳການກະກຽມ ແລະ ດຳເນີນການເລືອກຕັ້ງ ໃຫ້ຖືກຕ້ອງຕາມກົດໝາຍ, ແລະ ມີຄວາມເປັນເອກະພາບແຕ່ຂັ້ນສູນກາງແລະຂັ້ນທ້ອງຖິ່ນ;ເພື່ອສຶກສາອົບຮົມການເມືອງ-ແນວຄິດ ແລະ ປຸກລະດົມການເສີມຂະຫຍາຍຈິດໃຈຮັກຊາດ ສິດປະຊາທິປະໄຕ ໃນການເລືອກຕັ້ງ, ຍົກສູງສະຕິຊາດ, ມີຄວາມເປັນເອກະພາບ ແລະ ຄວາມສາມັກຄີປອງດອງ, ມີສະຕິລະວັງຕົວ, ເປັນເຈົ້າການຕອບຕ້ານກົນອຸບາຍ ແລະ ການທຳລາຍຂອງພວກປໍລະປັກທີ່ຫວັງມ້າງເພທຳລາຍລະບອບໃໝ່ຂອງພວກເຮົາ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ເອກະສານສຳຄັນຄື:ເຊື່ອມຊຶມແລະຜັນຂະຫຍາຍມະຕິກົມການເມືອງສູນກາງພັກວ່າດ້ວຍການເພີ່ມທະວີນຳພາ-ຊີ້ນຳຂອງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ເພີ່ມທະວີການນຳພາແນວຄິດແລະເສີມຂະຫຍາຍສິດປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V;ຄຳແນະນຳຂອງຄະນະກຳມະການເລືອກຕັ້ງລະດັບຊາດກ່ຽວກັບການແຕ່ງຕັ້ງຄະນະກຳມະການເລືອກຕັ້ງ ແລະ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງຂັ້ນທ້ອງຖິ່ນ, ຢູ່ສະຖານທູດ, ກົງສູນລາວ ແລະ ສຳນັກງານຜູ້ຕາງໜ້າຖາວອນຂອງສປປລາວຢູ່ຕ່າງປະເທດ; ແຈ້ງການເຖິງກະຊວງປ້ອງກັນປະເທດ-ກະຊວງປ້ອງກັນຄວາມສະຫງົບ ແລະ ຄະນະກຳມະການປົກຄອງແຂວງ, ນະຄອນຫຼວງກ່ຽວກັບການເກັບກຳສະຖິຕິຜູ້ມີສິດປ່ອນບັດເລືອກຕັ້ງ,ການກຳນົດໜ່ວຍປ່ອນບັດເລືອກຕັ້ງ ແລະ ການແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ; ຄຳແນະນຳກ່ຽວກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຄຳແນະນຳກ່ຽວກັບລະບຽບການຄຸ້ມຄອງງົບປະມານຮັບໃຊ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV;ຄຳແນະນຳຂອງຄະນະກຳມະການເລືອກຕັ້ງລະດັບຊາດວ່າດ້ວຍການໂຄສະນາ, ປຸກລະດົມຂະບວນການ ແລະ ຍ້ອງຍໍ; ຄຳຖາມ-ຄຳຕອບ ກ່ຽວກັບການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ຄຳຖາມ-ຄຳຕອບ ກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ; ຄຳຖາມ-ຄຳຕອບກ່ຽວກັບລະບຽບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ຄຳແນະນຳກ່ຽວກັບການຜັນຂະຫຍາຍຜົນສຳເລັດການດຳເນີນກອງປະຊຸມເຝິກອົບຮົມຄັ້ງນີ້.

ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມ ແລະ ປະກອບຄວາມເຫັນຕໍ່ແຕ່ລະເນື້ອໃນ ເພື່ອຄວາມເຂົ້າໃຈເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

**(ນາງ ກຸກກິກ ບຸດດາໄຊ)**



ສຸກສະບາຍຫາຍໂຣຄາ

# 3 ສູດເຄື່ອງດູດບໍາລຸງຜິວພັນ

**# ຮຽບຮຽງໂດຍ: ກະເດົາ**



**1. ນໍ້າໝາກພ້າວ:** ເນື່ອງຈາກວ່ານໍ້າໝາກພ້າວຈະມີລົດຫວານຕາມທໍາມະຊາດ ໂດຍບໍ່ມີການປຸງແຕ່ງ ນອກນີ້, ຍັງເປັນແຫຼ່ງໂພແທດຊຽມ ທີ່ຄົນສ່ວນໃຫຍ່ມັກຈະຂາດ ເຊິ່ງເກີດຈາກການກິນຜັກແລະໝາກໄມ້ບໍ່ພຽງພໍ ພ້ອມນັ້ນ, ນໍ້າໝາກພ້າວຍັງດີຕໍ່ຜິວພັນເພາະອຸດົມໄປດ້ວຍສານຕ້ານອະນຸມູນອິດສະຫຼະ ເຊິ່ງຊ່ວຍຢັບຢັ້ງຂະບວນການທີ່ເຮັດໃຫ້ຜິວແກ່ກ່ອນໄວເຊັ່ນ: ມີໄຟໂຕຮອກໂມນ ຫຼື ຮອກໂມນພືດ ໜຶ່ງໃນນັ້ນມີຊື່ວ່າທຣານຊີເອຕິນ ເຊິ່ງມີຄຸນສົມບັດຕໍ່ຕ້ານຮອຍແຫ່ວ ແລະ ຊ່ວຍຮັກສາຄວາມອ່ອນເຢົາ.

**2. ຊາຂຽວ:** ຊາຂຽວອຸດົມໄປດ້ວຍໂພລີຟີນ ເຊິ່ງເປັນສານຕ້ານອະນຸມູນທີ່ມີສັບພະຄຸນຕ້ານການອັກເສບ ແລະ ຕ້ານມະເຮັງ ມີການສຶກສາວ່າສານ EGCG ໃນໃບຊາຂຽວອາດຊ່ວຍປິ່ນປົວພະຍາດຜິວໜັງບາງຊະນິດໄດ້ ເຊັ່ນ: ພະຍາດສະເກັດເງິນ, ພະຍາດສິວໜ້າແດງ ແລະ ຮອຍແຫ່ວ; ນອກຈາກມີສານໂພລີຟີນທີ່ມີຄຸນສົມບັດປ້ອງກັນອັນຕະລາຍ ແລະ ຊ່ອມແຊມສ່ວນທີ່ເສຍຫາຍຈາກແສງແດດ; ການດື່ມຊາຂຽວຊ່ວຍປ້ອງກັນຄວາມເສຍຫາຍຈາກແສງແດດໄດ້ຢ່າງມີປະສິດທິຜົນອີກດ້ວຍ.

**3. ນໍ້າຜັກ ແລະ ໝາກໄມ້ສະກັດເຢັນ** ເປັນອີກວິທີໜຶ່ງທີ່ຊ່ວຍຕື່ມສານອາຫານທີ່ມີປະໂຫຍດ ເຂົ້າໄປໃນຮ່າງກາຍ ນໍ້າຜັກ-ໝາກໄມ້ສະກັດເຢັນ ແຕກຕ່າງຈາກນໍ້າໝາກໄມ້ຊະນິດອື່ນໆບ່ອນທີ່ວ່າບໍ່ມີນໍ້າຕານ, ບໍ່ຜ່ານຂະບວນການຄວາມຮ້ອນ ແລະ ແປຮູບຫຼາຍເກີນໄປ ມີສານອາຫານຫຼາຍກວ່າເຊັ່ນ: ວິຕາມິນ, ເກືອແຮ່ ແລະ ເອັນໄຊ ແຕ່ເຖິງຢ່າງໃດກໍຕາມຄຸນຄ່າຂອງຜັກ ຫຼື ໝາກໄມ້ສ່ວນຫຼາຍກໍອຸດົມໄປດ້ວຍວິຕາມິນຕ່າງໆ ແລະ ສານຕ້ານອະນຸມຸນອິດສະຫຼະທີ່ຊ່ວຍບໍາລຸງເຊວຜິວ.

**ຂໍ້ມູນຈາກ:**
**www.news.com.la**




# ໂລກປັດຈຸບັນ

**# ລູກທາດສາມປາງ**

✻ ໂລກຈະເລີນເດັ່ນກ້າວ ສະໄໝໃໝ່ໂລກາ
ຫຼາຍບັນຫາໃນສັງຄົມ ກ່າຍກອງພົ້ນປົ້ນ
ແປປ່ຽນຜັນບໍ່ຄືກໍ່ ວົນວຽນຮ້ອນເຮົ່ງ
ເສັງກັນຊີງຊ່ວງກ້າວ ສິນສ້ອຍເສື່ອມຊາມ

✻ ຍາມນີ້ຮີບເຮັ່ງຮ້ອນ ຊອກຢູ່ກະທໍາກິນ
ລືມສິນທໍາປະດັບໃຈ ລ່າຍລວງພາງຕົ້ມ
ສັງຄົມເຮົາຍາມນີ້ ຄົນທໍາດີໄຮ້ຄ່າ
ຄົນລຸບແຄ່ງເລຍຂາ... ເຂົາຜັດຍໍຍົກຍ້ອງ... ຊູຂຶ້ນກວ່າໃຜ... ໝ່າຍເດ!

✻ ໂລກຄວາມຈິງໂຫດຮ້າຍ ສະໄໝຍຸກປັດຈຸບັນ
ໃຊ້ມານຍາລົມລວງ ຕໍ່ກັນບໍ່ຈິງແທ້
ເຫັນແກ່ຜົນຫວັງໄດ້ ຄວາມຈິງໃຈບໍ່ໂອ້ອ່າວ
ໜ້າຂາວຫຼັງເຊື່ອງຊ້ອນ ລວງຕົ້ມລ່າຍກັນ

✻ ປັດຈຸບັນໂລກນີ້ ທະວີຕື່ມຄວາມມານຍາ
ຊອກຊ່ອງທາງຫາກິນ ກົເລດຄອງຄຸມຄັ້ນ
ຈັນຍາທໍາບໍ່ມີແລ້ວ ຄວາມດີນັບມື້ຫ່າງ
ເສື່ອມຊາມຈາງລ່າຍຕົ້ມ ງົມຫາຜົນແຕ່ສິ່ງໄດ້
ຄວາມຈິງໃຈເບິ່ງບໍ່ພໍ້ ລວງລົ້ມເຂົ້າໃສ່ກັນ... ແທ້ນາ!



ຫັກສາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

✻ **ຊົມ**ເຊີຍນໍ້າໃຈວັນຊາດທີ 2 ທັນວາ ຄົບຮອບ 50ປີທີ່ໄດ້ໝູນວຽນມາບັນຈົບອີກວາລະໜຶ່ງ ເຊິ່ງຫຼາຍພາກສ່ວນມີການຕົບແຕ່ງເອ້ ປະດັບຮຸ່ງເຮືອງໄຮ ທັງນອກ-ໃນອາຄານ ດອກດວງປະດັບເອ້ ຄໍາຂວັນຊົມເຊີຍຍ້ອງ ຄຸນຄວາມດີຂອງພັກ-ລັດ ປະຊາສຸກລາບລື້ນ ຜ່ານຄືນວັນອັນໂຫດຮ້າຍ ມີໄຊກ້າສະຫງ່າງາມ **ຊົມເຊີຍ!**

✻ **ເພື່ອ**ເປັນການກະກຽມໃຫ້ບຸນໃຫຍ່ 2 ທັນວາ **ໜ້າສະພາແຫ່ງຊາດ ໄດ້ມີການຊ້ອມ**ກ້ອນກໍາລັງ**ສະເຫຼີມສະຫຼອງຄັ້ງຍິ່ງໃຫຍ່** ໃນໂອກາດວັນຊາດ ຄົບຮອບ **50 ປີ** ທີ່ຈະມາເຖິງນີ້ ມີການນໍາຮ່ວມດ້ວຍ ກໍາລັງໃຫຍ່ສອນສະໜາມ ມີກໍາລັງເຮືອບິນ ເອີ້ນເວຫາຟ້າ ທັງກໍາລັງປ້ອງປະຊາພ້ອມເປັນຂະບວນແຫນແຫ່ **ເຊີນເດີ!** ພໍ່ແມ່ພີ່ນ້ອງ ໄປຊົມໃຫ້ອີ່ມຕາ **ທ່ານເອີຍ!**

## ຊວນຍິ້ມ

**# ພົ້ງອຶ່ງ**

## ເລື່ອງ: ໃຜກ້າ

ລຸງແດງເຈັບແຂ້ວ ເລີຍເຂົ້າໄປຫາໝໍ

**ໝໍ:** ແຂ້ວເຈົ້າມັນແມງຫຼາຍແລ້ວ, ຕ້ອງໄດ້ຫຼົກອອກ.

**ລຸງແດງ:** ຂ້ອຍຢ້ານການຫຼົກແຂ້ວທີ່ສຸດ... ທ່ານໝໍ.

ທ່ານໝໍຈຶ່ງປິ່ນໄປຫຍິບເຫຼົ້າໃຫ້ຈອກໜຶ່ງ, ພ້ອມເວົ້າວ່າ: "ລຸງລອງດື່ມເບິ່ງ, ບາງທີ່ຊິໃຈກ້າຂຶ້ນ"; ລຸງແດງກໍຍົກດື່ມລອດດຽວໝົດຈອກ.

**ໝໍ:** ເປັນແນວໃດແດ່ລຸງ.

**ລຸງແດງ:** ດີຂຶ້ນຫຼາຍເລີຍ! ມາເລີຍບາດນີ້, ບັກໃດບໍ່ຢ້ານຕາຍ ກໍລອງມາຫຼົກແຂ້ວກູເບິ່ງ.



## ສຸພາສິດ-ຄະຕິເຕືອນໃຈ

**#ດອກຫຍ້າ**

ໄກ່ຊິໜີ ຊີໃສ່ລົກ
ນົກຊິໜີ ຊີໃສ່ຮັງ

ລັດຖະສະພາຕ່າງປະເທດ

# ສະພາແຫ່ງຊາດຫວຽດນາມ ຜ່ານກົດໝາຍປະຊາກອນ, ກົດໝາຍຄວາມປອດໄພທາງໄຊເບີ, ແລະ ຫ້າມຂາຍຢາສູບໄຟຟ້າ ແລະ ຜະລິດຕະພັນຢາສູບໃຫ້ຄວາມຮ້ອນ




(Xinhua) - ວັນທີ 10 ທັນວາຜ່ານມາ, ສະພາແຫ່ງຊາດຫວຽດນາມ ໄດ້ຜ່ານກົດໝາຍປະຊາກອນ ເຊິ່ງມີບັນດາມາດຕະການສົ່ງເສີມການມີລູກ ແລະ ຮັກສາລະດັບອັດຕາການຈະເລີນພັນ ໃຫ້ຢູ່ໃນລະດັບທົດແທນ; ພາຍໃຕ້ ກົດໝາຍສະບັບສ້າງໃໝ່, ແມ່ຍິງຈະມີສິດລາພັກເກີດລູກເປັນເວລາ 7 ເດືອນ ສຳລັບລູກຄົນທີສອງ ຍາວກວ່ານະໂຍບາຍປັດຈຸບັນ 1 ເດືອນ, ສ່ວນພໍ່ຈະໄດ້ຮັບວັນລາພັກເພື່ອດູແລລູກ 10 ວັນລັດຖະການ.

ກົດໝາຍຍັງກຳນົດໃຫ້ມີການສະໜັບສະໜູນທາງການເງິນແກ່ແມ່ຍິງທີ່ມີລູກສອງຄົນກ່ອນອາຍຸ 35 ປີ ແລະ ໃຫ້ຄົວເຮືອນທີ່ມີລູກທາງຊີວະພາບ (biological children) 2 ຄົນຂຶ້ນໄປ ມີບຸລິມະສິດໃນການເຂົ້າເຖິງທີ່ຢູ່ອາໄສຂອງລັດເພື່ອຊື້ ຫຼື ເຊົ່າ.

ໃນວັນດຽວກັນ, ສະພາແຫ່ງຊາດ ໄດ້ຜ່ານກົດໝາຍຄວາມປອດໄພທາງອິນເຕີເນັດ ເຊິ່ງກຳນົດຂໍ້ບັງຄັບສະເພາະເພື່ອປົກປ້ອງກຸ່ມຄົນທີ່ມີຄວາມສ່ຽງໃນໂລກອິນເຕີເນັດ; ນອກຈາກເດັກແລ້ວ, ກົດໝາຍຍັງຂະຫຍາຍການປົກປ້ອງຜູ້ອາຍຸສູງ ແລະ ຜູ້ພິການທາງປັນຍາ ອີກດ້ວຍ.

ກົດໝາຍສະບັບນີ້ ໃຫ້ລາຍລະອຽດຄວາມຮັບຜິດຊອບຂອງອົງການລັດຖະບານ, ອົງການຈັດຕັ້ງ, ວິສາຫະກິດ ແລະ ຄອບຄົວ ໃນການປ້ອງກັນເນື້ອຫາທີ່ເປັນອັນຕະລາຍ, ການສ້າງເຄື່ອງມືສະໜັບສະໜູນທາງເຕັກນິກ ແລະ ແກ້ໄຂ ການລະເມີດສິດທິເດັກທາງອອນລາຍຢ່າງເຂັ້ມງວດ; ກົດໝາຍຍັງໄດ້ລວມເອົາບົດບັນຍັດຂອງສົນທິສັນຍາຂອງສະຫະປະຊາຊາດ ວ່າດ້ວຍການຕໍ່ຕ້ານອາຊະຍາກຳທາງອິນເຕີເນັດ ເຂົ້າໄວ້ໃນກົດໝາຍພາຍໃນປະເທດ, ສ້າງພື້ນຖານທາງກົດໝາຍສຳລັບການແບ່ງປັນຂໍ້ມູນ, ການສືບສວນຮ່ວມ ແລະ ຄວາມພະຍາຍາມເພື່ອຕໍ່ສູ້ກັບອາຊະຍາກຳທາງອິນເຕີເນັດຂ້າມຊາຍແດນ.

ກົດໝາຍ 2 ສະບັບນີ້ ຈະມີຜົນບັງຄັບໃຊ້ໃນວັນທີ 1 ກໍລະກົດ 2026.

ວັນທີ 11 ທັນວາ, ສະພາແຫ່ງຊາດ ໄດ້ຜ່ານກົດໝາຍການລົງທຶນສະບັບປັບປຸງ ທີ່ຈະຫ້າມຂາຍຢາສູບໄຟຟ້າແລະຜະລິດຕະພັນຢາສູບແບບໃຫ້ຄວາມຮ້ອນ ຕັ້ງແຕ່ວັນທີ 1 ມັງກອນ 2026; ລາຍຊື່ທຸລະກິດທີ່ຖືກຫ້າມ ຍັງປະກອບດ້ວຍການຄ້າຂາຍສານເສບຕິດ, ສານເຄມີ ແລະ ແຮ່ທາດບາງຊະນິດ, ພືດ ແລະ ສັດປ່າ ທີ່ມາຈາກທຳມະຊາດ, ແລະ ບໍລິການຄ້າປະເວນີ.

ປີ 2024, ສະພາແຫ່ງຊາດ ໄດ້ອະນຸມັດມະຕິຄວບຄຸມການຫ້າມການຜະລິດ, ການຄ້າ, ການນຳເຂົ້າ, ການຄອບຄອງ, ການຂົນສົ່ງ, ການນຳໃຊ້ຢາສູບໄຟຟ້າແລະຜະລິດຕະພັນຢາສູບແບບໃຫ້ຄວາມຮ້ອນ.

ແອງເຈລາ ແພຣດທ໌ (Angela Pratt) ຜູ້ຕາງໜ້າອົງການອະນາໄມໂລກປະຈຳຫວຽດນາມ ກ່າວວ່າ ຜົນກະທົບທາງບວກເລີ່ມປາກົດໃຫ້ເຫັນແລ້ວ 1 ປີຫຼັງຈາກມີການອອກມະຕິດັ່ງກ່າວ; ນາງກ່າວຕື່ມວ່າ ໃນສະຖານພະຍາບານຕ່າງໆ ເຊັ່ນ ໂຮງໝໍແບກມາຍ (Bach Mai), ຈຳນວນຄົນເຈັບສຸກເສີນທີ່ກ່ຽວຂ້ອງກັບຢາສູບໄຟຟ້າ ຫຼຸດລົງເຖິງ 70%, ຂະນະທີ່ການສົ່ງເສີມການຂາຍຢາສູບໄຟຟ້າ ແລະ ຜະລິດຕະພັນຢາສູບແບບໃຫ້ຄວາມຮ້ອນ ຫຼຸດລົງ ຫຼື ຢຸດເຊົາທັງໝົດ ໃນຫຼາຍແຫ່ງ.



# ສະພາ Chile ຜ່ານຮ່າງກົດໝາຍຫ້າມໃຊ້ສະມາດໂຟນໃນໂຮງຮຽນ



(AFP) - ນັບຕັ້ງແຕ່ເດືອນມີນາປີໜ້າ, ນັກຮຽນໃນປະເທດຊິເລ ຈະໄດ້ຮັບອະນຸຍາດໃຫ້ໃຊ້ໂທລະສັບອັດສະລິຍະພາຍໃນໂຮງຮຽນ "ເມື່ອມີຄວາມຈຳເປັນຢ່າງແທ້ຈິງ" ຕາມທີ່ກົດໝາຍກຳນົດໄວ້ເທົ່ານັ້ນ.

ວັນທີ2ທັນວາຜ່ານມາ, ສະພາຜູ້ແທນປະຊາຊົນ ໄດ້ມີມະຕິສຽງສ່ວນຫຼາຍອະນຸມັດຮ່າງກົດໝາຍຫ້າມການໃຊ້ໂທລະສັບອັດສະລິຍະພາຍໃນບໍລິເວນໂຮງຮຽນ ໂດຍຈະມີຜົນບັງຄັບໃຊ້ນັບແຕ່ເດືອນມີນາ 2026 ຢູ່ໂຮງຮຽນປະຖົມ ແລະ ມັດທະຍົມ ທັງຂອງລັດ ແລະ ເອກະຊົນທຸກແຫ່ງ.

ເນື້ອໃນຂອງຮ່າງກົດໝາຍຍັງລະບຸວ່າ ການໃຊ້ໂທລະສັບອັດສະລິຍະໃນໂຮງຮຽນ "ເປັນພະຍາດລະບາດໃຫຍ່ທີ່ສົ່ງຜົນກະທົບຕໍ່ເດັກ ແລະ ເຍົາວະຊົນຂອງຊິເລ" ແລະ ສົ່ງຜົນກະທົບຕໍ່"ຄຸນນະພາບຂອງຂະບວນການສຶກສາ ແລະ ການຮຽນຮູ້ໃນຫ້ອງຮຽນ"; ຮ່າງກົດໝາຍກຳນົດອີກວ່າ ນັກຮຽນຈະໄດ້ຮັບອະນຸຍາດໃຫ້ໃຊ້ໂທລະສັບອັດສະລິຍະໃນໂຮງຮຽນໄດ້ ກໍຕໍ່ເມື່ອມີຄວາມຕ້ອງການດ້ານການສຶກສາພິເສດ, ໃນກໍລະນີເຫດການສຸກເສີນ ຫຼື ຫາກມີພາວະທາງການແພດທີ່ຕ້ອງມີການຕິດຕາມຢ່າງຕໍ່ເນື່ອງ.

ການເຄື່ອນໄຫວນີ້ຂອງຊິເລ ຖືເປັນປະເທດຫຼ້າສຸດທີ່ມີການອອກກົດໝາຍຫ້າມການໃຊ້ໂທລະສັບອັດສະລິຍະພາຍໃນໂຮງຮຽນ ນອກເໜືອຈາກບຣາຊິນ, ແຟງລັງ, ສ.ເກົາຫຼີ, ອີຕາລີ ແລະ ຝຣັ່ງ.

ຕາມຂໍ້ມູນຂອງອົງການການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ແຫ່ງສະຫະປະຊາຊາດ (UNESCO) ລະບຸວ່າ: ຮອດທ້າຍປີ 2024, ຫຼາຍກວ່າ 40% ຂອງໂຮງຮຽນໃນທົ່ວໂລກສັ່ງຫ້າມການໃຊ້ໂທລະສັບອັດສະລິຍະພາຍໃນສະຖານສຶກສາ ໃນລະດັບທີ່ແຕກຕ່າງກັນ ເຊິ່ງເພີ່ມຂຶ້ນຈາກ 30% ເມື່ອປີກ່ອນໜ້າ.

# Zambia ກຽມອອກກົດໝາຍເພື່ອຮັບປະກັນການສຶກສາຟຣີ

(Xinhua) - ຊຳບີ ກຳລັງເລັ່ງດຳເນີນການເພື່ອຮັບປະກັນວ່າເດັກຈະໄດ້ຮັບການສຶກສາໂດຍບໍ່ເສຍຄ່າ ໂດຍຜ່ານການອອກກົດໝາຍທີ່ຈະຮັບປະກັນການສຶກສາໂດຍບໍ່ເສຍຄ່າສຳລັບເດັກ, ເຈົ້າໜ້າທີ່ລະດັບສູງຂອງລັດຖະບານກ່າວເມື່ອວັນທີ 2 ທັນວາຜ່ານມາ.



ລັດຖະມົນຕີກະຊວງສຶກສາທິການ ດັກລາສ ຊະຢາຄາລິມາ (Douglas Syakalima) ກ່າວວ່າ ກະຊວງໄດ້ສະເໜີປັບປຸງກົດໝາຍການສຶກສາສະບັບປັດຈຸບັນ ເພື່ອຮັບປະກັນການສຶກສາໂດຍບໍ່ເສຍຄ່າສຳລັບເດັກຕັ້ງແຕ່ໄວປະຖົມ ຈົນເຖິງຊັ້ນມັດທະຍົມສຶກສາ. "ພວກເຮົາໄດ້ເຫັນຜົນປະໂຫຍດອັນໃຫຍ່ຫຼວງຈາກການສຶກສາໂດຍບໍ່ເສຍຄ່າ ແລະ ພວກເຮົາຕ້ອງການໃຫ້ແນ່ໃຈວ່ານະໂຍບາຍນີ້ ຖືກບັນຍັດໄວ້ໃນກົດໝາຍ" ເຂົາກ່າວໃນຂະນະທີ່ພົບປະກັບເຈົ້າໜ້າທີ່ຈາກສະມາຄົມການປະກັນຄຸນນະພາບການສຶກສາໃນປະເທດຊຳບີ (Educational Association for Quality Assurance in Zambia - EAQAZ)ແລະສະຖາບັນການສຶກສາຊັ້ນສູງ.ເຂົາກ່າວວ່າ,ການເພີ່ມຂຶ້ນຂອງຈຳນວນນັກຮຽນທີ່ລົງທະບຽນຮຽນນັບຕັ້ງແຕ່ມີນະໂຍບາຍການສຶກສາໂດຍບໍ່ເສຍຄ່າໄດ້ຖືກຈັດຕັ້ງປະຕິບັດໃນປີ 2022 ສະ ແດງໃຫ້ເຫັນເຖິງຄວາມຮຽກຮ້ອງຕ້ອງການດ້ານການສຶກສາທີ່ແຂງແຮງ, ເຊິ່ງກ່ອນໜ້ານີ້ຖືກຂັດຂວາງດ້ວຍການເກັບຄ່າຮຽນ.

ຊິລາໂອ ມູເຕຊາ (Chilao Mutesa) ປະທານ EAQAZ ກ່າວວ່າ ພາລະກິດຂອງອົງການ ແມ່ນເພື່ອສົ່ງເສີມຄວາມເປັນເລີດ, ຊຸກຍູ້ການຮ່ວມມືແລະເສີມສ້າງຄວາມສາມາດໃນການຮັບປະກັນຄຸນນະພາບໃນທົ່ວລະບົບການສຶກສາຂອງຊຳບີ.ເຂົາຍິນດີກັບການຕັດສິນໃຈຂອງລັດຖະບານ ໃນການອອກກົດໝາຍກ່ຽວກັບການສຶກສາໂດຍບໍ່ເສຍຄ່າ, ໂດຍກ່າວວ່າຈະເຮັດໃຫ້ນະໂຍບາຍນີ້ ມີຄວາມຖາວອນ.

ປະທານາທິບໍດີຮາໄຄນ໌ເດ ຮິຊິເລມາ (Hakainde Hichilema) ກ່າວເມື່ອບໍ່ດົນມານີ້ວ່າ ການນຳນະໂຍບາຍການສຶກສາໂດຍບໍ່ເສຍຄ່າມາໃຊ້ ໄດ້ສົ່ງຜົນໃຫ້ເດັກຫຼາຍກວ່າ 2.3 ລ້ານຄົນ ໄດ້ກັບຄືນໄປໂຮງຮຽນເມື່ອເດືອນຕຸລາ.

# Libya ເລີ່ມກະກຽມການເລືອກຕັ້ງ ປະທານາທິບໍດີ ແລະ ລັດຖະສະພາ ປີ 2026



(Xinhua) - ຄະນະກຳມະການເລືອກຕັ້ງແຫ່ງຊາດລະດັບສູງຂອງລີບີ(High National Elections Commission - HNEC) ປະກາດເມື່ອວັນທີ 8 ທັນວາຜ່ານມາວ່າ ໄດ້ເລີ່ມກະກຽມເພື່ອຈັດການເລືອກຕັ້ງປະທານາທິບໍດີ ແລະ ລັດຖະສະພາໃນກາງເດືອນເມສາ2026; ໃນຖະແຫຼງການທີ່ພິມເຜີຍແຜ່ໃນໜ້າເຟສບຸກຢ່າງເປັນທາງການ, ຄະນະກຳມະການກ່າວວ່າ ໄດ້ເລີ່ມກະກຽມ ແລະ ເຜີຍແຜ່ຂອບກົດລະບຽບສຳລັບການເລືອກຕັ້ງປະມຸກລັດ ແລະ ລັດຖະສະພາ.

HNEC ຍັງກ່າວອີກວ່າ, ຂະນະນີ້ ພວມຮ່າງກົດລະບຽບກ່ຽວກັບການສະເໜີຊື່ຜູ້ສະໝັກເພື່ອໃຫ້ພວກເຂົາມີເວລາພຽງພໍໃນການກວດກາຄືນເງື່ອນໄຂ ແລະ ຂັ້ນຕອນຕ່າງໆ ເພື່ອກະກຽມເຂົ້າຮ່ວມການເລືອກຕັ້ງ.

ເມື່ອບໍ່ດົນມານີ້, ສະພາຄວາມໝັ້ນຄົງແຫ່ງສະຫະປະຊາຊາດ (ສປຊ) ໄດ້ຮຽກຮ້ອງໃຫ້ຄະນະຜູ້ແທນສະໜັບສະໜູນຂອງ ສປຊ ໃນລີບີ ເລັ່ງແກ້ໄຂຂໍ້ຂັດແຍ້ງກ່ຽວກັບການປັບປຸງກົດໝາຍການເລືອກຕັ້ງທີ່ສະເໜີໂດຍ "ຄະນະກຳມາທິການ 6+6" ເຊິ່ງປະກອບດ້ວຍສະມາຊິກສະພາຜູ້ແທນປະຊາຊົນ 6 ຄົນ ແລະ ສະມາຊິກສະພາສູງແຫ່ງລັດ6ຄົນ ມີໜ້າທີ່ໃນການຮ່າງຂອບກົດໝາຍສຳລັບການເລືອກຕັ້ງ.

ສະພາຜູ້ແທນປະຊາຊົນແມ່ນລັດຖະສະພາ ເຊິ່ງຕັ້ງຢູ່ພາກຕາເວັນອອກ, ຂະນະທີ່ສະພາສູງແຫ່ງລັດ ແມ່ນອົງການສະພາທີ່ປຶກສາ ເຊິ່ງຕັ້ງຢູ່ນະຄອນຫຼວງຕຣີໂປລີເປັນຕົວແທນໃຫ້ອະດີດສະມັດຊາແຫ່ງຊາດ (General National Congress); ທັງສອງອົງການມີບົດບາດສຳຄັນໃນຂະບວນການທາງການເມືອງ ແລະ ມີສ່ວນຮ່ວມການເຈລະຈາທາງສະຖາບັນ.

ນັບຕັ້ງແຕ່ການລົ້ມສະຫຼາຍຂອງອະດີດຜູ້ນຳ ມູອຳມາຣ໌ ກັດດາຟີ(Muammar Gaddafi) ໃນປີ 2011, ລີບີ ໄດ້ແບ່ງອອກເປັນສອງລັດຖະບານຄູ່ແຂ່ງຄື: ລັດຖະບານເອກະພາບແຫ່ງຊາດທີ່ຕັ້ງຢູ່ນະຄອນຫຼວງຕຣີໂປລີ ນຳພາໂດຍ ອັບດຸນ ຮາມິດ ດະເບບາ (Abdul Hamid Dbeibah) ແລະ ລັດຖະບານທີ່ຕັ້ງຢູ່ພາກຕາເວັນອອກ ເຊິ່ງໄດ້ຮັບການແຕ່ງຕັ້ງໂດຍສະພາຜູ້ແທນປະຊາຊົນແລະນຳພາໂດຍ ໂອຊາມາ ຮຳໝັດ (Osama Hammad).

# ຜົນການເລືອກຕັ້ງສະມາຊິກ ສະພານິຕິບັນຍັດຮົງກົງ ຊຸດທີ XII




(Xinhua) - ຜົນການເລືອກຕັ້ງສະພານິຕິບັນຍັດຮົງກົງ ຊຸດທີ VIII ຂອງເຂດບໍລິຫານພິເສດຮົງກົງ, ສປຈີນ ໄດ້ຖືກເຜີຍແຜ່ໃນຕອນເຊົ້າວັນຈັນທີ 8 ທັນວາຜ່ານມາ; ສະມາຊິກໃໝ່ທັງໝົດ 90 ຄົນ ໃນນັ້ນ 40 ຄົນ ໄດ້ຮັບເລືອກໂດຍຄະນະກຳມະການເລືອກຕັ້ງ, 30 ຄົນ ຈາກເຂດເລືອກຕັ້ງທາງອາຊີບ (functional constituencies) ແລະ 20 ຄົນ ຈາກເຂດເລືອກຕັ້ງທາງພູມສາດ(geographical constituencies) ໂດຍຜ່ານການເລືອກຕັ້ງໂດຍກົງ.

ສະມາຊິກສະພານິຕິບັນຍັດເຂດບໍລິຫານພິເສດຮົງກົງ ຊຸດທີ VIII ຈະເລີ່ມວາລະ 4 ປີ ໃນວັນທີ 1 ມັງກອນ 2026.

ການລົງຄະແນນສຽງໄດ້ດຳເນີນແຕ່ເວລາ 7:30 ຫາ 23:30 ໂມງ ໃນວັນອາທິດ 7 ທັນວາ ໂດຍມີຜູ້ສະໝັກ 161 ຄົນ ແຂ່ງຂັນກັນເພື່ອຊິງທີ່ນັ່ງ ເຊິ່ງທຸກທີ່ນັ່ງມີການແຂ່ງຂັນກັນຢ່າງດຸເດືອດ.

ແອນດຣູ ຫຼຽງ ກວັນ-ຢວນ (Andrew Leung Kwan-yuen) ປະທານສະພານິຕິບັນຍັດ ຊຸດທີ VII ກ່າວໃນການຖະແຫຼງຂ່າວເມື່ອວັນອັງຄານທີ 9 ທັນວາ ເຊິ່ງມີການເຂົ້າຮ່ວມຂອງສະມາຊິກສະພານິຕິບັນຍັດທັງປັດຈຸບັນ ແລະ ຜູ້ທີ່ໄດ້ຮັບການເລືອກຕັ້ງໃໝ່ ວ່າ: ສະມາຊິກສະພານິຕິບັນຍັດ ຊຸດທີ VIII ຄາດວ່າຈະເຮັດວຽກກັບລັດຖະບານ ເພື່ອຊຸກຍູ້ຂະບວນການພັດທະນາຂອງຮົງກົງໃຫ້ຫຼາຍຂຶ້ນ; ເຊື່ອວ່າການເລືອກຕັ້ງຄັ້ງນີ້ ສະແດງໃຫ້ເຫັນເຖິງແຮງຊຸກຍູ້ທີ່ດີທີ່ເກີດໂດຍຫຼັກການ "ຜູ້ຮັກຊາດ ບໍລິຫານຮົງກົງ" (patriots administering Hong Kong), ນີ້ຈະຊ່ວຍຊຸກຍູ້ການປະຕິຮູບ ແລະ ບັນລຸການພັດທະນາທີ່ຍິ່ງໃຫຍ່ກວ່າສຳລັບຮົງກົງ. ຫຼຽງສະໜັບສະໜູນໃຫ້ສະມາຊິກສະພານິຕິບັນຍັດທີ່ໄດ້ຮັບການເລືອກຕັ້ງຄືນ 50 ຄົນ ຕິດຕໍ່ສື່ສານກັບສະມາຊິກໃໝ່ 40 ຄົນ ເພື່ອຊ່ວຍໃຫ້ພວກເຂົາປັບຕົວເຂົ້າກັບບົດບາດໃໝ່.

# ສະພາເຢຍລະມັນ ຜ່ານຮ່າງກົດໝາຍ ປະຕິຮູບການເກນທະຫານ

(BBC)-ສະພາຕ່ຳເຢຍລະມັນ ໄດ້ຜ່ານແຜນການປະຕິຮູບກອງທັບເຊິ່ງຍັງບໍ່ແມ່ນການຟື້ນຟູການເກນທະຫານເຕັມຮູບແບບ, ແຕ່ກຳນົດໃຫ້ຜູ້ຊາຍທຸກຄົນທີ່ມີອາຍຸ 18 ປີເຂົ້າຮັບການ "ກວດຄັດເລືອກພາກບັງຄັບ" ພ້ອມມາດຕະການເພີ່ມຄ່າຕອບແທນ ເພື່ອຈູງໃຈສະໝັກເຂົ້າຮ່ວມກອງທັບ.

ວັນທີ 5 ທັນວາຜ່ານມາ, ສະພາຕ່ຳ ໄດ້ມີມະຕິສຽງສ່ວນຫຼາຍ 323 ຕໍ່ 272 ສຽງ ແລະ ງົດລົງຄະແນນ 1 ສຽງ ຮັບຮອງຮ່າງກົດໝາຍກ່ຽວກັບໂຄງການປະຕິຮູບການສະໝັກເຂົ້າເປັນທະຫານ ເຊິ່ງເຖິງແມ່ນວ່າຍັງບໍ່ທັນຮອດຂັ້ນນຳເອົາການເກນທະຫານກັບມາໃຊ້ຢ່າງເຕັມຮູບແບບ, ແຕ່ຈະລວມເຖິງການກວດຄັດເລືອກພາກບັງຄັບສຳລັບຜູ້ຊາຍທຸກຄົນທີ່ມີອາຍຸ 18 ປີ ແລະ ມີຊຸດມາດຕະການຈູງໃຈເພີ່ມຕື່ມ ເຊັ່ນການຂຶ້ນຄ່າຕອບແທນເພື່ອໂນ້ມນ້າວໃຫ້ການສະໝັກເຂົ້າເປັນທະຫານ "ເປັນເລື່ອງທີ່ໜ້າສົນໃຈຫຼາຍຂຶ້ນ".

ປັດຈຸບັນ, ກອງທັບຂອງເຢຍລະມັນ ມີທະຫານປະຈຳການພຽງປະມານ 182,000 ຄົນ ແລະ ກຳລັງພົນສຳຮອງປະມານ 49,000 ຄົນເທົ່ານັ້ນ, ຂະນະທີ່ເປົ້າໝາຍຂອງອົງການສົນທິສັນຍາອັດລັງຕິກເໜືອ ຫຼື ນາໂຕ (North Atlantic Treaty Organization-NATO) ຕ້ອງການໃຫ້ເຢຍລະມັນ ມີກຳລັງທະຫານລວມເຖິງ 460,000 ຄົນ ເຊິ່ງປະກອບດ້ວຍທະຫານປະຈຳການ 260,000 ຄົນ ແລະ ກຳລັງສຳຮອງ 200,000 ຄົນ.




ບໍຣິສ ພິສໂຕຣິອຸສ (Boris Pistorius) ລັດຖະມົນຕີກະຊວງປ້ອງກັນປະເທດເຢຍລະມັນ ກ່າວວ່າ ຮ່າງກົດໝາຍດັ່ງກ່າວ ທີ່ເຖິງແມ່ນວ່າຍັງຕ້ອງໄດ້ຮັບການອະນຸມັດຈາກສະພາສູງ ແຕ່ຖືເປັນ "ບາດກ້າວສຳຄັນສຳລັບການເພີ່ມຄວາມສາມາດໃນການປ້ອງກັນຕົນເອງຂອງເຢຍລະມັນ" ແລະ ເສີມວ່າ "ພັນທະມິດຂອງເຢຍລະມັນກຳລັງເຝົ້າເບິ່ງຢູ່", ແຕ່ບໍ່ໄດ້ກ່າວຢ່າງເຈາະຈົງວ່າໝາຍເຖິງໃຜ.

ກະຊວງປ້ອງກັນປະເທດເຢຍລະມັນຄາດຄະເນວ່າ, ໃນປີນີ້ຈະມີທະຫານເກນໃໝ່ປະມານ 15,000 ຄົນ ເຊິ່ງຫຼາຍກວ່າປີຜ່ານມາ 5,000 ຄົນ ແລະ ລັດຖະບານຄາດຫວັງວ່າ ຈະເພີ່ມຈຳນວນຜູ້ສະໝັກໃໝ່ເກືອບ 3 ເທົ່າ ເປັນ 40,000 ຄົນ ໃນປີ 2031.

ເຖິງຢ່າງໃດກໍຕາມ, ພິສໂຕຣິອຸສ ບອກທາງອ້ອມວ່າ, ຫາກມາດຕະການໃໝ່ຍັງບໍ່ສາມາດດຶງດູດຜູ້ສະໝັກຢ່າງພຽງພໍ, ລັດຖະສະພາຈະຕ້ອງພິຈາລະນາຟື້ນຟູບາງມາດຕະການເກນທະຫານ ກັບມາມີຜົນບັງຄັບໃຊ້ອີກຄັ້ງ.

ເບິ່ງໄວ້ ໄດ້ບົດຮຽນ

# ເສັ້ນທາງເພື່ອແກ້ໄຂ ບັນຫາແມ່ຍິງຍັງອີກຍາວໄກ

❖ ວິເສດ ສະແຫວງສຶກສາ

ຫວ່າງບໍ່ດົນມານີ້ ສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ (ສປຊ) ໄດ້ຈັດກອງປະຊຸມເພື່ອສະຫຼຸບສັງລວມກ່ຽວກັບຜົນຮັບໃນການເຄື່ອນໄຫວຂອງປະຊາຄົມໂລກເພື່ອປົກປ້ອງສິດທິ, ຜົນປະໂຫຍດຂອງແມ່ຍິງຢ່າງຮອບດ້ານ; ຂອບການສະຫຼຸບຕີລາຄານີ້ໄດ້ກວມເອົາຕະຫຼອດໄລຍະ 25 ປີ ຄືນັບແຕ່ມີການປະຕິບັດເປົ້າໝາຍສະຫັດສະວັດ ເຊິ່ງບັນດາປະມຸກລັດ, ຫົວໜ້າລັດຖະບານໃນທົ່ວໂລກ ໄດ້ຮັບຮອງເອົາຢູ່ກອງປະຊຸມສະຫັດສະວັດ ໃນທ້າຍປີ 2000 ທີ່ສຳນັກງານໃຫຍ່ອົງການ ສປຊ. ໜຶ່ງໃນບັນຫາສຳຄັນທີ່ເປັນເປົ້າໝາຍແກ້ໄຂ ແລະ ຊຸກຍູ້ນັ້ນ ກໍຄືເລື່ອງສິດທິ ແລະ ຜົນປະໂຫຍດຂອງແມ່ຍິງ ທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ ທີ່ລົງລະອຽດໄປຮອດດ້ານສຸຂະພາບ, ຄວາມປອດໄພໃນເວລາເກີດລູກ, ສິດທິສະເໝີພາບໃນການເຂົ້າເຖິງການສຶກສາ, ວຽກເຮັດງານທຳ; ທາງດ້ານການເມືອງນັ້ນ ກໍໄດ້ມີການກຳນົດຄວາມພະຍາຍາມໃຫ້ແມ່ຍິງ ໄດ້ຖືກເລືອກເຂົ້າລັດຖະສະພາ ບໍ່ຫຼຸດ 30% ຂອງຈຳນວນ ສສຊ ທັງໝົດຂອງແຕ່ລະປະເທດ.

ໃນກອງປະຊຸມສະພາຄວາມໝັ້ນຄົງ ສປຊ ທີ່ພວມເວົ້າຮອດຢູ່ນີ້, ທ່ານ ອັນໂຕນີໂອ ກູເຕີເຣັດ ເລຂາທິການໃຫຍ່ອົງການ ສປຊ ໄດ້ມີຄຳເຫັນແບບນ້ອຍອົກນ້ອຍໃຈທີ່ເຫັນວ່າ ຕະຫຼອດ 25 ປີຜ່ານມາ, ການຕໍ່ສູ້ເພື່ອປົກປ້ອງສິດທິ ແລະ ຜົນປະໂຫຍດຂອງແມ່ຍິງນັ້ນ ຍັງເຮັດໄດ້ໜ້ອຍທີ່ສຸດ. ສະແດງອອກຢູ່ບ່ອນວ່າ ໃນເຂດທີ່ມີສະພາບຂັດແຍ້ງທາງທະຫານນັ້ນ ແມ່ຍິງ ແລະ ເດັກຍິງໜຸ່ມ ຍັງຕົກເປັນເຫຍື່ອຂອງຄວາມຫາຍະນະ, ການໃຊ້ຄວາມຮຸນແຮງທາງເພດຕໍ່ແມ່ຍິງໃນ 25 ປີຜ່ານມານັ້ນ ໄດ້ເພີ່ມຂຶ້ນ 35%, ຢູ່ໃນບາງພາກພື້ນຈຳນວນເດັກຍິງໄວຮຸ່ນທີ່ຕົກເປັນເຫຍື່ອຄວາມຮຸນແຮງທາງເພດ ກວມເອົາປະມານເຄິ່ງໜຶ່ງຂອງເຫຍື່ອທັງໝົດ; ໃນເຂດທີ່ມີຄວາມຂັດແຍ້ງ (ສົງຄາມ) ແມ່ຍິງທີ່ເສຍຊີວິດໃນເວລາເກີດລູກ ໄດ້ເພີ່ມຂຶ້ນຍ້ອນຂາດຢຸກຢາ ແລະ ການຊ່ວຍເຫຼືອອັນຈຳເປັນ. ຄຳໝັ້ນສັນຍາທີ່ບອກວ່າ ຈະໃຫ້ແມ່ຍິງມີສ່ວນຮ່ວມຫຼາຍຂຶ້ນໃນການຕັດສິນບັນຫາສັນຕິພາບຕ້ານສົງຄາມ, ແຕ່ໃນຕົວຈິງແລ້ວ ແມ່ຍິງຍັງບໍ່ໄດ້ຮັບສິດເທົ່າທີ່ຄວນໃນການເຂົ້າຮ່ວມໂຕະເຈລະຈາ; ຂະບວນການຕໍ່ສູ້ຂອງແມ່ຍິງເພື່ອສັນຕິພາບ ເຖິງວ່າມີ ແຕ່ພັດຍັງຂາດທຶນຮອນ, ບໍ່ພຽງແຕ່ເທົ່ານັ້ນ, ຜູ້ນຳເພດຍິງໃນຂະບວນດັ່ງກ່າວ ຍັງປະເຊີນກັບການນາບຂູ່ ແລະ ບໍ່ຖືກຮັບຮູ້.

ໃນ 25 ປີຜ່ານມາ, ກອງປະຊຸມສະພາຄວາມໝັ້ນຄົງ ສປຊ ໄດ້ຮັບຮອງເອົາມະຕິເລກທີ 1325 ກ່ຽວກັບແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ; ແຕ່ຜົນຮັບຈາກພາກປະຕິບັດຕົວຈິງນັ້ນຍັງບອບບາງແລະໜ້າເປັນຫ່ວງ ເພາະມັນບໍ່ເປັນໄປຕາມເປົ້າໝາຍ. ໃນປີ 2024 ຈຳນວນແມ່ຍິງ ແລະ ເດັກຍິງ ຈຳນວນ 676 ລ້ານຄົນ ໄດ້ດຳລົງຊີວິດຢູ່ພື້ນທີ່ໆຫ່າງຈາກບ່ອນທີ່ມີການສູ້ຮົບກັນດ້ວຍກຳລັງອາວຸດຢ່າງດຸເດືອດ ພຽງ 50 ກິໂລແມັດ, ໃນເຂດດັ່ງກ່າວ ເດັກຍິງບໍ່ໄດ້ເຂົ້າຮຽນ, ແມ່ຍິງທີ່ເປັນນັກການເມືອງ, ນັກໜັງສືພິມ, ນັກເຄື່ອນໄຫວເພື່ອສິດທິມະນຸດປະເຊີນກັບການໃຊ້ຄວາມຮຸນແຮງ; ອົງການເຄື່ອນໄຫວທີ່ມີແມ່ຍິງເປັນຜູ້ນຳ ຈຳນວນ 90% ຂາດທຶນຮອນ ແລະ ຄາດວ່າໃນນັ້ນປະມານເກືອບເຄິ່ງຈະຖືກປິດລົງໃນ 6 ເດືອນຂ້າງໜ້າ.




#ບ່າວກະບື

ເມຍ: "ນ້ອງພູມໃຈຫຼາຍ ທີ່ເຫັນຊື່ອ້າຍຢູ່ໃນປຶ້ມທີ່ມີຊື່ສຽງທີ່ສຸດຫົວໜຶ່ງ.

ຜົວ: ເຫີ! ປຶ້ມຫົວນັ້ນຊື່ແນວໃດ?"

ເມຍ: "ປຶ້ມໂທລະສັບ"

#BAOKBU

WIFE: "I was very happy to see your name in one of the most famous books."

HUSBAND: "Oh let me know the name of that book."

WIFE: "The telephone directory."

ຕາມພາສາ ກາຕູນ




1. ດື່ມສິ່ງມຶນເມົາແລ້ວຂັບລົດ ສ່ຽງຕໍ່ອຸບັດຕິເຫດ

2. ດື່ມຢ່າງມີສະຕິ ດ້ວຍຄວາມຮັບຜິດຊອບຕໍ່ຕົນເອງ ແລະ ສັງຄົມ "ເມົາບໍ່ຂັບລົດ"

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

## ສູນທອນພົດ...

(ຕໍ່ຈາກໜ້າ 6)

ນະທຳ-ສັງຄົມ ແລະ ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ; ສືບຕໍ່ຂຸດຄົ້ນ ແລະ ເສີມຂະຫຍາຍທ່າແຮງ, ຄວາມສາມາດບົ່ມຊ້ອນ, ສົມທົບກຳລັງແຮງຂອງຊາດ ກັບກຳລັງແຮງຂອງຍຸກສະໄໝ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດບົນພື້ນຖານການເຊີດຊູສະຕິຊາດ, ເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ທັງສາມາດກ້າວອອກສູ່ໂລກໄດ້ຢ່າງໜັກແໜ້ນ; ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ປະຊາຊົນໄດ້ຊົມໃຊ້ໝາກຜົນຈາກການພັດທະນາຢ່າງຍຸຕິທຳ ແລະ ທົ່ວເຖິງ, ສ້າງຄວາມຢູ່ດີກິນດີ ແລະ ຮັ່ງມີຂຶ້ນຢ່າງບໍ່ຢຸດຢັ້ງ. ພວກເຮົາຕ້ອງສູ້ຊົນບັນລຸຄາດໝາຍໃຫຍ່ໃນການສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ທີ່ລະບຸໄວ້ໃນໂຄງການການເມືອງຂອງພັກ ວ່າ "ຮອດປີ 2055 ເມື່ອວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 100 ປີ, ສປປ ລາວ ເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງ, ມີລະບົບການເມືອງທີ່ເຂັ້ມແຂງ, ມີພື້ນຖານເສດຖະກິດທີ່ທັນສະໄໝ, ກຳລັງການຜະລິດໄດ້ຮັບການພັດທະນາຮອບດ້ານ ໂດຍມີການພົວພັນການຜະລິດທີ່ສອດຄ່ອງ ແລະ ກ້າວໜ້າ, ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໄດ້ມີພື້ນຖານອັນໜັກແໜ້ນ ກ້າວສູ່ຄວາມອີ່ມໜຳສຳລານ".

ພວກເຮົາຈະສືບຕໍ່ປົກປັກຮັກສາໝາກຜົນຂອງການປະຕິວັດ, ຜົນງານ ແລະ ໄຊຊະນະ ຕະຫຼອດໄລຍະ 50 ປີ ດ້ວຍຊີວິດ ແລະ ອຸດົມການອັນເດັດດ່ຽວໜຽວແໜ້ນ, ສະເໝີຕົ້ນສະເໝີປາຍ ຂອງຮຸ່ນຄົນສືບທອດຕໍ່ໄປຕາບເທົ່າໃດໆ.

ດ້ວຍການເສີມຂະຫຍາຍນ້ຳໃຈຮັກຊາດອັນດູດດື່ມ, ຄວາມບໍລິສຸດຜຸດຜ່ອງ, ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ຄວາມເສຍສະຫຼະອັນສູງສົ່ງຂອງທົ່ວພັກ, ທົ່ວລັດແລະທົ່ວກຳລັງປະກອບອາວຸດ, ຄວາມສາມັກຄີເປັນປຶກແຜ່ນແໜ້ນໜາຂອງປວງຊົນລາວທັງຊາດ. ດ້ວຍຄວາມປາຖະໜາອັນແຮງກ້າ, ຄວາມເຊື່ອໝັ້ນອັນເຕັມປ່ຽມຂອງປະຊາຊົນຕໍ່ອະນາຄົດອັນສະຫວ່າງສະໄຫວຂອງປະເທດຊາດທີ່ບັນພະບຸລຸດຂອງພວກເຮົາໄດ້ວາງຮາກຖານ ແລະ ປູພື້ນເອົາໄວ້ ເຊິ່ງພວມໄດ້ຮັບການຕໍ່ຍອດແລະຍົກລະດັບຂຶ້ນດ້ວຍຮຸ່ນຄົນປັດຈຸບັນ ແລະ ຜູ້ສືບທອດທີ່ຈົງຮັກພັກດີນັ້ນ, ພວກເຮົາຈະສາມາດບັນລຸຈຸດໝາຍສ້າງ ສປປລາວ ສັນຕິພາບ ເອກະລາດປະຊາທິປະໄຕເອກະພາບ ແລະ ວັດທະນະຖາວອນ ເກີດເປັນຈິງຢ່າງແນ່ນອນ.

-ສາທາລະນະລັດປະຊາທິປະໄຕປະຊາຊົນລາວໝັ້ນຍືນ!

-ພັກປະຊາຊົນປະຕິວັດລາວທີ່ມີກຽດສະຫງ່າໝັ້ນຍືນ!

-ປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຍິ່ງໃນພາລະກິດປະຕິວັດ ແລະ ຢູ່ໃນດວງໃຈ ຂອງປະຊາຊົນລາວຕະຫຼອດໄປ!

- ນ້ຳໃຈວັນຊາດ ທີ 2 ທັນວາ ໝັ້ນຍືນ!

**(ຂໍຂອບໃຈ)**

ຜູ້ຊີ້ນຳ
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພົດສະໄໝ ບຸນວິໄລ

ຄະນະບັນນາທິການ
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊອຍໄຊຍະ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ
ຮູບພາບປະກອບ
ທ່ານ ສອນສັກ ວັນວິໄຊ

www.na.gov.la ຂ່າວ "ຜູ້ແທນປະຊາຊົນ" Phouthen Pasaxon News Lao NA Media APP: Lao NA